ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສໍານັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-30 ພະຈິກ 2025

ປີທີ 14

ສະບັບທີ 1043

ລາຍສັບປະດາ

## ກອງປະຊຸມສະໄໝສາມັນເທື່ອທີ 10 ປິດລົງດ້ວຍຜົນສໍາເລັດຢ່າງຈົບງາມ




(ສພຊ) - ຕອນບ່າຍວັນທີ 21 ພະຈິກນີ້, ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ປິດລົງດ້ວຍຜົນສໍາເລັດອັນຈົບງາມ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານກໍາມະການກົມການເມືອງ

ອ່ານຕໍ່ໜ້າ 8

## ປະດັບຫຼຽນລະນຶກ 5 ປີ, ຫຼຽນລະນຶກ 5 ປີ ສະພາແຫ່ງຊາດ



(ສພຊ)-ໃນວາລະຕອນບ່າຍວັນພະຫັດທີ 20 ພະຈິກຜ່ານມາ, ກອງປະຊຸມສະໄໝສາມັນເທື່ອ 10 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ມີພິທີປະດັບຫຼຽນກາລະນຶກ 50 ປີ ສະພາແຫ່ງຊາດ, ຫຼຽນລະນຶກ 5 ປີ ແລະ ຍ້ອງຍໍໃຫ້ແກ່ສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ IX ເຊິ່ງໃນພິທີ, ທ່ານ ສຸບັນ ສະວະບຸດ ປະທານກໍາມາທິການວຽກ

ອ່ານຕໍ່ໜ້າ 11



ແນວຄິດປະທານ

### ໄກສອນ ພົມວິຫານ

ຜູ້ນໍາທີ່ປະຊາຊົນເຄົາລົບຮັກ

ພະນັກງານເປັນສິ່ງຕັດສິນທຸກຢ່າງ, ການຈັດຕັ້ງຈະດີ ແລະການຈັດຕັ້ງຈະເຂັ້ມແຂງໄດ້ ຕ້ອງມີຄົນທີ່ເຂັ້ມແຂງເຊັ່ນດຽວກັນ.

(ບົດພົມເລືອກເຟັ້ນ ເຫຼັ້ມ 3, ໜ້າ 156, 157)

ມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ ໄດ້ກໍານົດວ່າ: "ພວກເຮົາຕ້ອງດັດແປງວຽກງານພະນັກງານໂດຍພື້ນຖານ, ນັບແຕ່ທັດສະນະໄປເຖິງກົນໄກເລືອກເຟັ້ນ, ບໍາລຸງ ແລະ ສັບຊ້ອນພະນັກງານ, ກ່ອນອື່ນໝົດ ແມ່ນຕ້ອງດັດແປງທັດສະນະຂອງຜູ້ເຮັດວຽກງານຈັດຕັ້ງພະນັກງານ".

(ບົດພົມເລືອກເຟັ້ນ ເຫຼັ້ມ 3, ໜ້າ 160-161)

ອ່ານຕໍ່ສະບັບໜ້າ

## ກອງປະຊຸມຄັ້ງທໍາອິດຂອງອະນຸກໍາມະການ ໂຄສະນາ ແລະ ປຸກລະດົມຂະບວນການ



ອ່ານຕໍ່ໜ້າ 11

## ຜົນສໍາເລັດການພິຈາລະນາຮັບຮອງວຽກງານຂອງສານ ແລະ ໄອຍະການ

(ສພຊ) - ຕອນບ່າຍວັນສຸກທີ 21 ພະຈິກນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈໍາສະພາແຫ່ງຊາດຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສໍາເລັດການພິຈາລະນາຮັບ

ອ່ານຕໍ່ໜ້າ 2



## ເຜີຍແຜ່ມະຕິກົມການເມືອງ ແລະ ການກະກຽມວຽກງານເລືອກຕັ້ງ



(ສພຊ) - ວັນພະຫັດທີ 20ພະຈິກຜ່ານມາ, ກອງປະຊຸມສະໄໝສາມັນເທື່ອ 10 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ຄໍາໃບ ດໍາລັດ ຮອງປະທານສະພາແຫ່ງຊາດ ເຊິ່ງກອງປະຊຸມໄດ້ຮັບຟັງການເຜີຍແຜ່ມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນໍາພາ-ຊີ້ນໍາຂອງອົງຄະນະພັກທຸກຂັ້ນ ຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ສະເໜີປະຫວັດຄວາມເປັນມາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຈາກທ່ານ

ອ່ານຕໍ່ໜ້າ 8

## ສະແດງຜົນງານການເຄື່ອນໄຫວຂອງສະພາແຫ່ງຊາດ



ອ່ານຕໍ່ໜ້າ 8

ຖອດສິ່ງທີ່ເປັນປະໂຫຍດຈາກລັດທິທຶນນິຍົມ (ໜ້າ 8)



ອາຫານທີ່ຄວນກິນ... (ໜ້າ 10)

ເຝົ້າໄວ້ ໄດ້ຂີດຂຽນ

❖ ວິເສດ ສະແຫວງສຶກສາ

ເງິນເມັດທີ່ມາພ້ອມໆກັບ... (ໜ້າ 12)

**ຊົມເຊີຍຜົນສໍາເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

# ມອບ-ຮັບເຄື່ອງຊ່ວຍເຫຼືອ



(ສພຊ) - ວັນທີ 21 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີພິທີມອບຮັບ-ເຄື່ອງຊ່ວຍເຫຼືອໃຫ້ແກ່ສະພາປະຊາຊົນແຂວງຊຽງຂວາງ ເພື່ອນຳໄປແຈກຢາຍໃຫ້ແກ່ພໍ່ແມ່ປະຊາຊົນທີ່ທຸກຍາກ ເຊິ່ງເຄື່ອງທີ່ນຳມາມອບໃນຄັ້ງນີ້ປະກອບມີ: ເຄື່ອງນຸ່ງຫົ່ມປະເພດກັນໜາວ ລວມມູນຄ່າ 35 ລ້ານກີບ; ກ່າວມອບໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ແລະ ກ່າວຮັບໂດຍທ່ານ ບຸນໂຮມ ເທດທານີ ປະທານສະພາປະຊາຊົນແຂວງຊຽງຂວາງ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ຮອງວຽກງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີບາງຕອນວ່າ: ໃນໄລຍະ 5 ປີຜ່ານມາ ສານປະຊາຊົນ ໄດ້ເອົາໃຈໃສ່ພັດທະນາແບບແຜນ ແລະ ກົນໄກການດຳເນີນຄະດີຂອງສານ ໂດຍມີການປັບປຸງກົນໄກ ແລະ ການຈໍລະຈອນເອກະສານຢູ່ສານປະຊາຊົນສູງສຸດ ເພື່ອໃຫ້ການດຳເນີນຄະດີມີຄວາມວ່ອງໄວ ແລະ ສອດຄ່ອງຕາມກົດໝາຍກວ່າເກົ່າ; ຊຸກຍູ້ ແລະ ສົ່ງເສີມຜູ້ພິພາກສາໃນການຄົ້ນຄວ້າຄະດີແບບເປັນມືອາຊີບ ແລະ ສ້າງຜູ້ພິພາກສາ ດີ-ເກັ່ງ ໄດ້ 71 ທ່ານ ກວມເອົາ 62.83%; ໄດ້ພິຈາລະນາຕັດສິນຄະດີທີ່ເຂົ້າມາສານປະຊາຊົນ ແລະ ສານທະຫານ 35,068 ເລື່ອງ, ແກ້ໄຂໄດ້ 31,937 ເລື່ອງ ເທົ່າກັບ 91.07%. ສຳລັບອົງການໄອຍະການປະຊາຊົນສູງສຸດ ໄດ້ຍົກສູງຄຸນນະພາບການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ ດີຂຶ້ນກວ່າເກົ່າ ເຊິ່ງໃນໄລຍະ 5 ປີຜ່ານມາ ມີຄະດີອາຍາ 56,683 ເລື່ອງ, ແກ້ໄຂໄດ້ 56,196 ເລື່ອງ ເທົ່າກັບ 99.14%; ເຂົ້າຮ່ວມຖະແຫຼງໃນທີ່ປະຊຸມສານ 31,942 ເລື່ອງ, ສານຕັດສິນເອົາຕາມຄຳຖະແຫຼງ 30,888 ເລື່ອງ ເທົ່າກັບ 96.7%; ມີຄະດີແພ່ງ 11,532 ເລື່ອງ, ແກ້ໄຂໄດ້ 11.437 ເລື່ອງ ເທົ່າກັບ 99.17%.

ຄຽງຄູ່ກັບຜົນງານ ແລະ ຜົນສຳເລັດນັ້ນ, ສະມາຊິກສະພາແຫ່ງຊາດ (ສສຊ) ຍັງສະເໜີໃຫ້ທັງສອງອົງການເອົາໃຈໃສ່ການປັບປຸງກົງຈັກການຈັດຕັ້ງ ແລະ ການບຳລຸງສ້າງບຸກຄະລາກອນ ໃຫ້ມີຈັນຍາບັນ, ຈັນຍາທຳ ແລະ ຄວາມຮັບ ຜິດຊອບ ເພື່ອຮັບປະກັນການປະຕິບັດພາລະບົດບາດຂອງ 2 ອົງການ ມີປະສິດທິພາບແລະປະສິດທິຜົນຫຼາຍຂຶ້ນ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຕາມຕົວຈິງຂອງທ້ອງຖິ່ນ, ເຮັດໃຫ້ປະຊາຊົນໄດ້ເຂົ້າເຖິງຂະບວນຍຸຕິທຳໄດ້ງ່າຍ ແລະ ທົ່ວເຖິງຫຼາຍຂຶ້ນກວ່າເກົ່າ, ຄຸນນະພາບໃນການດຳເນີນຄະດີຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ໃຫ້ເຂັ້ມງວດຂຶ້ນຕາມຂັ້ນຕອນຂອງກົດໝາຍ ແລະ ຖືກຕ້ອງຕາມຄວາມເປັນຈິງ ເພື່ອເຮັດໃຫ້ສັງຄົມ ນັບມື້ມີຄວາມສະຫງົບ, ປອດໄພ, ມີຄວາມເປັນທຳ ແລະ ຍຸຕິທຳ.

ເພື່ອຮັບປະກັນໃຫ້ເຮັດບັນດາຄາດໝາຍ, ແຜນການ, ມາດຕະການ 5 ປີ (2026-2030) ແລະ ປະຈຳປີ 2026 ສາມາດຈັດຕັ້ງປະຕິບັດໄດ້, ສສຊ ໄດ້ສະເໜີໃຫ້ສອງອົງການ ສືບຕໍ່ບາງວຽກງານດັ່ງນີ້:

- ສຶກສາອົບຮົມການເມືອງ-ແນວຄິດ ຕິດພັນກັບການບຳລຸງສ້າງ ແລະ ຍົກລະດັບວິຊາສະເພາະ ເປັນລະບົບຕໍ່ເນື່ອງໃຫ້ບຸກຄະລາກອນມີຈັນຍາບັນ-ຈັນຍາທຳ, ມີຄວາມຊຳນານງານ; ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຢ່າງຂວາງ ແລະ ທົ່ວເຖິງ ດ້ວຍຫຼາຍຮູບຫຼາຍວິທີການ;

-ປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ ໃຫ້ເປັນລະບົບ ແລະ ເໝາະສົມ, ສອດຄ່ອງກັບການປັບປຸງອົງການປົກຄອງຖິ່ນຕາມລັດຖະທຳມະນູນ ສະບັບປີ 2025 ເຮັດໃຫ້ລະບົບຍຸຕິທຳຫຍັບເຂົ້າໃກ້ປະຊາຊົນໃຫ້ຫຼາຍຂຶ້ນ;

- ການດຳເນີນຄະດີ ຕ້ອງເພີ່ມຄວາມເຂັ້ມງວດໃນການປະຕິບັດກົດໝາຍທີ່ກ່ຽວຂ້ອງ ຮັບປະກັນຫຼັກການຂອງການດຳເນີນຄະດີ, ເກັບກຳກວດກາຂໍ້ມູນຫຼັກຖານໃຫ້ຄົບຖ້ວນ, ຕີລາຄາຊັ່ງຊາຫຼັກຖານໃຫ້ຊັດເຈນ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ເຮັດໃຫ້ການດຳເນີນຄະດີມີຄວາມວ່ອງໄວ, ຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຕົວຈິງ, ໂປ່ງໃສ ແລະ ເປັນທຳ;

-ເພີ່ມທະວີການປະສານສົມທົບລະຫວ່າງອົງການທີ່ຮັບຜິດຊອບໃນການດຳເນີນຄະດີໃຫ້ເປັນລະບົບ, ກົມກຽວ, ສອດຄ່ອງ, ມີຄວາມເປັນເອກະພາບກັນຂຶ້ນຕື່ມ;

- ສະເໜີລັດຖະບານ ພິຈາລະນາສະໜອງງົບປະມານເພີ່ມ ແລະ ພາຫະນະທີ່ຈຳເປັນໃຫ້ແກ່ສອງອົງການເພື່ອສາມາດປະຕິບັດໜ້າທີ່ວຽກງານຢ່າງມີຄຸນນະພາບຕາມແຜນການທີ່ວາງໄວ້.

# ເກັບລາຍຮັບໃຫ້ຄົບຖ້ວນ ບັນລຸ 20% ຂອງ GDP ຂຶ້ນໄປ



(ສພຊ) - ຕອນບ່າຍວັນຈັນທີ 17 ພະຈິກຜ່ານມາ, ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ (ສພຊ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 5 ປີ ຄັ້ງທີ IX (2021-2025) ແລະ ປີ 2025 ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ແລະ ແຜນປີ 2026 ແລະ ບົດລາຍງານສະຫຼຸບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ເຊິ່ງທ່ານສັງລວມຫຍໍ້ໃຫ້ຊາບດັ່ງນີ້:

1. ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານ ສະແດງອອກໃນຜົນງານທີ່ຍາດມາໄດ້ ເປັນຕົ້ນ ອັດຕາການເຕີບໂຕເສດຖະກິດ (GDP) ໄລຍະ 5 ປີ (2021-2025)ຂະຫຍາຍຕົວ4.24%, ສຳລັບປີ 2025 ຄາດວ່າຈະຂະຫຍາຍຕົວໃນລະດັບ 4.8%; ບາງຂະແໜງການຈະສາມາດປະຕິບັດໄດ້ຕາມຄາດໝາຍ ເປັນຕົ້ນ: ກະສິກຳ ແລະ ອຸດສາຫະກຳ, ການເກັບລາຍຮັບໄດ້ເກີນແຜນ, ການຄ້າຕ່າງປະເທດເກີນດຸນ, ເງິນເຟີ້ມີທ່າອຽງຫຼຸດລົງ, ການປະຕິບັດບາງຄາດໝາຍດ້ານວັດທະນະທຳ-ສັງຄົມ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມຄືບໜ້າທີ່ດີ.

2. ກອງປະຊຸມຍັງສະແດງຄວາມເປັນຫ່ວງຕໍ່ການປະຕິບັດບາງຄາດໝາຍຂອງແຜນການ 5 ປີ ຄັ້ງທີ IX (2021-2025), ແຜນການປີ 2025 ແລະ ວາລະແຫ່ງຊາດ ເຖິງວ່າເສດຖະກິດມີການເຕີບໂຕ ແຕ່ຄຸນນະພາບຍັງບໍ່ທັນສູງ, ລາຍໄດ້ສະເລ່ຍຕໍ່ຫົວຄົນຍັງຕ່ຳກວ່າຄາດໝາຍ, ການພັດທະນາຂົງເຂດກະສິກຳຍັງບໍ່ທັນໄດ້ຮັບພັດທະນາເທົ່າທີ່ຄວນ, ການປຸງແຕ່ງຍັງບໍ່ທັນມີຄວາມຫຼາກຫຼາຍ, ລາຄາສິນຄ້າບາງໝວດຍັງເພີ່ມຂຶ້ນສູງ, ການສ້ອມແປງເສັ້ນທາງທີ່ເປ່ເພຍັງຊັກຊ້າ, ການຄຸ້ມຄອງໂຄງການສຳຫຼວດຂຸດຄົ້ນແຮ່ທາດຍັງບໍ່ທັນມີປະສິດທິພາບ ແລະ ປະສິດທິຜົນ, ການພັດທະນາຄຸນນະພາບການສຶກສາ ແລະ ສາທາລະນະສຸກ ຍັງບໍ່ທັນໄດ້ດີ, ການອອກໃບຕາດິນຍັງມີຄວາມຄືບໜ້າໜ້ອຍ, ການແກ້ໄຂປາກົດການຫຍໍ້ທໍ້ດ້ານສັງຄົມຍັງບໍ່ທັນໄດ້ດີ, ກອງປະຊຸມສະເໜີໃຫ້ລັດຖະບານ ຄົ້ນຄວ້າວິທີການແກ້ໄຂບັນຫາດັ່ງກ່າວ ໃຫ້ມີຜົນສຳເລັດ.

3. ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2026, ກອງປະຊຸມສະເໜີໃຫ້ລັດຖະບານ ເອົາໃຈໃສ່ການພັດທະນາຕາມທິດການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ແລະ ຕາມທິດສີຂຽວ ແລະ ຍືນຍົງ, ເກັບລາຍຮັບໃຫ້ຄົບຖ້ວນ ບັນລຸ 20% ຂອງ GDP ຂຶ້ນໄປ ພ້ອມທັງປະຕິບັດລາຍຈ່າຍງົບປະມານໃສ່ການພັດທະນາວຽກຈຸດສຸມບຸລິມະສິດຂອງລັດຖະບານເຊັ່ນ: ການພັດທະນາຂະແໜງການສຶກສາ, ສາທາລະນະສຸກ, ການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ, ການກໍ່ສ້າງສ້ອມແປງເສັ້ນທາງ, ການກໍ່ສ້າງຕ້ານຕາຝັ່ງເຈື່ອນຕາມເຂດຊາຍແດນ.

4. ສະເໜີລັດຖະບານສືບຕໍ່ສ້າງສະຖຽນລະພາບດ້ານເງິນຕາ ເພື່ອຮັບປະກັນສະຖຽນລະພາບທາງດ້ານເສດຖະກິດມະຫາພາກ, ເຮັດໃຫ້ອັດຕາເງິນເຟີ້ຢູ່ໃນລະດັບຕ່ຳ, ຄວບຄຸມໃຫ້ອັດຕາແລກປ່ຽນຄົງທີ່, ເພີ່ມປະລິມານຄັງສຳຮອງເງິນຕາຕ່າງປະເທດ ໃຫ້ກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 5 ເດືອນຂຶ້ນໄປ, ສ້າງຄັງແຮດ້ວຍຄຳ ເພື່ອຮັກສາສະຖານະພາບດ້ານການເງິນຂອງປະເທດເຮົາໃຫ້ໝັ້ນຄົງ, ສະໜອງສິນເຊື່ອດອກເບ້ຍຕ່ຳ ເຂົ້າໃນການຜະລິດ ແລະ ປຸງແຕ່ງສິນຄ້າໃຫ້ພຽງພໍ.

5. ເພີ່ມທະວີການຊຸກຍູ້, ສົ່ງເສີມການຜະລິດກະສິກຳໃຫ້ແຂງແຮງ ພ້ອມທັງເອົາໃຈໃສ່ຊ່ວຍເຫຼືອຊາວກະສິກອນດ້ານເຕັກນິກວິຊາການ, ທຶນຮອນ, ຕະຫຼາດຈຳໜ່າຍແລະຟື້ນຟູພື້ນທີ່ທຳການຜະລິດທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃຫ້ສາມາດສືບຕໍ່ການຜະລິດປົກກະຕິ ເພື່ອຄ້ຳປະກັນສະບຽງອາຫານ ແລະ ເປັນສິນຄ້າ, ຈຳກັດການນຳເຂົ້າສິນຄ້າທີ່ສາມາດຜະລິດໄດ້ພາຍໃນຢ່າງເຂັ້ມງວດ, ຄຸ້ມຄອງລາຄາສິນຄ້າ ແລະ ສະບຽງອາຫານ ໃນລະດັບທີ່ເໝາະສົມ.

6. ສືບຕໍ່ກວດກາຢ່າງເຂັ້ມງວດຕໍ່ບັນດາໂຄງການລົງທຶນທີ່ມີປະສິດທິຜົນຕ່ຳ, ສຸມໃສ່ການພັດທະນາໂຄງການພະລັງງານໄຟຟ້າທົດແທນເສີມໃສ່ບັນດາສະຖານີຈຸດທີ່ຂາດແຄນ ເພື່ອສະໜອງໄຟຟ້າໃຫ້ພຽງພໍກັບການຊົມໃຊ້ພາຍໃນ, ຄຸ້ມຄອງ ແລະ ປັບປຸງໂຄງສ້າງລາຄາໄຟຟ້າໃຫ້ເໝາະສົມກັບສະພາບຕົວຈິງ ບໍ່ໃຫ້ກະທົບຕໍ່ຊີວິດເປັນຢູ່ ແລະ ການຜະລິດ.

7. ສຸມງົບປະມານໃສ່ການກໍ່ສ້າງແລະສ້ອມແປງເສັ້ນທາງທີ່ເປ່ເພ ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ ເພື່ອອຳນວຍຄວາມສະດວກການຂົນສົ່ງ, ການສັນຈອນໄປ-ມາຂອງປະຊາຊົນ ແລະ ການທ່ອງທ່ຽວ, ຄວບຄຸມລົດບັນທຸກນ້ຳໜັກເກີນແລະມີມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ.

8. ສືບຕໍ່ຊຸກຍູ້, ສົ່ງເສີມການຫັນເປັນທັນສະໄໝໃນການບໍລິຫານລັດ, ການພັດທະນາເສດຖະກິດ ແລະ ການຄຸ້ມຄອງສັງຄົມແບບດິຈິຕອນດ້ວຍການຂະຫຍາຍເຄືອຂ່າຍເຊື່ອມໂຍງຖານຂໍ້ມູນບັນດາອົງການຈັດຕັ້ງລັດ, ພາກທຸລະກິດ, ເອກະຊົນ ແລະ ປະຊາຊົນດ້ວຍເອເລັກໂຕຣນິກທີ່ທັນສະໄໝ ໃຫ້ເຊື່ອມໂຍງເຂົ້າຫາກັນໄດ້ຢ່າງສະດວກ, ວ່ອງໄວ ແລະ ປອດໄພ.

9. ກອງປະຊຸມເຫັນດີໂດຍພື້ນຖານຕໍ່ການສະເໜີປັບປຸງດັດຊະນີເງິນເດືອນ, ເງິນນະໂຍບາຍ ແລະ ເງິນອຸດໜູນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ຄູ ແລະ ພະນັກງານບຳນານ ທີ່ຈະເລີ່ມຈັດຕັ້ງປະຕິບັດໃນເດືອນ 1 ປີ 2026 ເປັນຕົ້ນໄປ ແຕ່ລາຍລະອຽດສະເໜີໃຫ້ສືບຕໍ່ຄົ້ນຄວ້າ ແລະ ກຳນົດນະໂຍບາຍທີ່ຊັດເຈນແລະຮັດກຸມ.

10. ສືບຕໍ່ນຳເອົາຄຳຄິດເຫັນຂອງສະມາຊິກສະພາແຫ່ງຊາດ ໄປຄົ້ນຄວ້າປັບປຸງການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ, ສອດຄ່ອງກັບສະພາບຄວາມເປັນຈິງ ເພື່ອກະກຽມສະເໜີຮັບຮອງໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

# ພິຈາລະນາການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ



(ສພຊ) - ຕອນບ່າຍວັນສຸກທີ 14 ພະຈິກຜ່ານມາ, ທ່ານ ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະແຕ່ປີ 2021-2025 ເຊິ່ງໄດ້ຮັບການປະກອບຄຳຄິດຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ(ສສຊ) ຢ່າງມີຈຸດສຸມ, ກົງໄປກົງມາ, ສາມາດສັງລວມເນື້ອໃນໄດ້ດັ່ງນີ້:

ຕໍ່ກັບຜົນສຳເລັດ: ສສຊ ສະແດງຄວາມຊົມເຊີຍແລະເຫັນດີໂດຍພື້ນຖານຕໍ່ບົດລາຍງານຂອງລັດຖະບານ ເຊິ່ງສະແດງໃຫ້ເຫັນຄວາມຕັ້ງໜ້າພະຍາຍາມຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີຜ່ານມາ (2021-2025) ເຖິງແມ່ນວ່າ ສະພາບສາກົນ, ພາກພື້ນ ແລະ ພາຍໃນປະເທດ ຈະມີຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ນັບທັງຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19, ບັນດາກົນອຸບາຍ, ເລ່ຫຼ່ຽມການຄ້າຂາຍຢາເສບຕິດທີ່ມີລັກສະນະເລີກແລບ, ແນບນຽນ ແລະ ຮຸນແຮງຂຶ້ນ. ແຕ່ເຖິງຢ່າງໃດກໍຕາມ, ຍ້ອນຄວາມຕັດສິນໃຈຂອງລັດຖະບານ ແລະ ການຮ່ວມມືຂອງສັງຄົມ, ເຫັນວ່າ 6 ແຜນວຽກຈຸດສຸມຂອງວາລະແຫ່ງຊາດທີ່ໄດ້ກຳນົດໄວ້ແມ່ນໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດໃນລະດັບດີພໍສົມຄວນ ອັນພົ້ນເດັ່ນແມ່ນໄດ້ເຮັດໃຫ້ປະຊາຊົນບັນດາເຜົ່າໃນທົ່ວປະເທດ ມີສະຕິສູງຕໍ່ການເຄົາລົບກົດໝາຍ, ພິ່ມຄວາມຮັບຮູ້ຕໍ່ຜົນຮ້າຍຂອງຢາເສບຕິດ ແລະ ປະກອບສ່ວນເຂົ້າໃນການແກ້ໄຂບັນຫາຢາເສບຕິດຢ່າງກວ້າງຂວາງ; ກົດໝາຍ ແລະ ບັນດານິຕິກຳ ຮັບໃຊ້ການເຄື່ອນໄຫວວຽກງານ ໄດ້ຮັບການສ້າງ ແລະ ປັບປຸງຢ່າງເປັນລະບົບ; ຄະນະພັກ-ຄະນະນຳ, ອົງການປົກຄອງແຕ່ລະຂັ້ນ ແລະ ທຸກພາກສ່ວນທັງຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ເພີ່ມຄວາມຮັບຜິດຊອບຂອງຕົນສູງຂຶ້ນ; ບັນດາປະເທດເພື່ອນມິດ ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອ; ຜູ້ຕິດຢາເສບຕິດ (ຜູ້ຖືກເຄາະຮ້າຍ) ຈຳນວນຫຼາຍ ໄດ້ຮັບການນຳໄປບຳບັດ, ປິ່ນປົວກັບຄືນເປັນພົນລະເມືອງດີຂອງສັງຄົມ; ເຈົ້າໜ້າທີ່ສາມາດແກ້ໄຂຄະດີຢາເສບຕິດໄດ້ເຖິງ 21,003 ເລື່ອງ, ຈັບຜູ້ຖືກຫາໄດ້ 31,289 ຄົນ/ຍິງ 3,254 ຄົນ ໃນນັ້ນ: ຄົນຕ່າງປະເທດ 938 ຄົນ/ຍິງ 85 ຄົນ, ຢຶດວັດຖຸເຄື່ອງຂອງກາງຄະດີເປັນຢາເສບຕິດປະເພດຕ່າງໆ, ວັດຖຸອຸປະກອນແລະພາຫະນະ ໄດ້ເປັນຈຳນວນຫຼາຍ, ໄດ້ທຳລາຍແຫຼ່ງປູກ, ແຫຼ່ງຜະລິດ, ແຫຼ່ງຊຸກເຊື່ອງຢາເສບຕິດ ແລະ ຄວບຄຸມ, ສະກັດກັ້ນການຊົມໃຊ້ຜິດທີ່ມີສານເສບຕິດເຊັ່ນ: ໃບ-ນ້ຳກະທ້ອມ; ສານລະເຫີຍເສບຕິດ: ປຸ້ມເປົ້າອັດແກັດ (ສານໄນຕັດອັອກໄຊ), ຢາສູບໄຟຟ້າ-ຊີຊ່າ (ບາລາກູ); ສານເສບຕິດຊະນິດໃໝ່ເຊັ່ນ: ຄາລໍເຈັນປະສົມສິ່ງເສບຕິດ, ກາເຟເຕັ້ນ ໄດ້ຫຼາຍສົມຄວນ; ສິ່ງທີ່ສຳຄັນແມ່ນສາມາດແກ້ໄຂຫົ່ນແໜ່ງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ທີ່ມີຜົນພວງມາຈາກຢາເສບຕິດ ໄດ້ໂດຍພື້ນຖານ, ສ້າງສະພາບແວດລ້ອມ, ເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄດ້ຢ່າງຕໍ່ເນື່ອງ.

ຄຽງຄູ່ຜົນສຳເລັດນັ້ນຍັງເຫັນວ່າມີດ້ານອ່ອນ-ຄົງຄ້າງເປັນຕົ້ນ: ຄະນະພັກ-ອົງການປົກຄອງຫຼາຍບ່ອນ ຍັງບໍ່ທັນກຳແໜ້ນມະຕິ, ຄຳສັ່ງ ຂອງກົມການເມືອງສູນກາງພັກ ກໍຄືເນື້ອໃນຈິດໃຈສຳຄັນທີ່ເປັນພື້ນຖານຂອງວາລະແຫ່ງຊາດ, ຈຶ່ງເຮັດໃຫ້ການນຳພາ-ຊີ້ນຳການຈັດຕັ້ງປະຕິບັດບໍ່ທັນຕັ້ງໜ້າ, ຍັງຖືເປັນວຽກງານປົກກະຕິ ແລະ ຜົນສຳເລັດບໍ່ທັນສູງ; ການເຂົ້າຮ່ວມຂອງມະຫາຊົນຍັງບໍ່ທັນກວ້າງຂວາງເທົ່າທີ່ຄວນ, ການສ້າງຄວາມເຂັ້ມແຂງໃຫ້ສະຖາບັນຄອບຄົວ, ຊຸມຊົນໃນການຕ້ານຢາເສບຕິດ ໂດຍສະເພາະໃນກຸ່ມຍິງໜຸ່ມ-ຊາຍໜຸ່ມ ຍັງບໍ່ທັນແຂງແຮງ; ການສ້າງບ້ານ, ໂຮງຮຽນ, ສະຖານທີ່ປອດຢາເສບຕິດຍັງບໍ່ທັນບັນລຸຕາມຄາດໝາຍ; ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເຖິງຈະໄດ້ຮັບການປັບປຸງຫຼາຍສົມຄວນແຕ່ການໂຄສະນາເຜີຍແຜ່ບໍ່ທັນກວ້າງຂວາງ; ການປະກອບວັດຖຸອຸປະກອນ, ພາຫະນະເຕັກນິກ, ງົບປະມານຮັບໃຊ້ວາລະແຫ່ງຊາດ ຍັງພົບຄວາມຫຍຸ້ງຍາກ; ສູນບຳບັດ, ປິ່ນປົວ ບໍ່ທັນໄດ້ມາດຕະຖານ; ການແກ້ໄຂເປົ້າໝາຍ ຍັງເຮັດບໍ່ທັນໄດ້ດີ, ແກ້ໄຂໄດ້ແຕ່ເປົ້າໝາຍຂົນສົ່ງ, ເປົ້າໝາຍຊື້-ຂາຍລາຍຍ່ອຍ, ລາຍກາງ, ສ່ວນເປົ້າໝາຍລາຍໃຫຍ່ຫືວໂປ່ໂຕການ ໄດ້ໜ້ອຍ; ການດຳເນີນຄະດີຍັງຊັກຊ້າ.

ທິດທາງໃນຕໍ່ໜ້າ: ສສຊ ເຫັນດີຕາມທິດທາງແຜນການວຽກງານຈຸດສຸມໃນທ້າຍປີ 2025 ແລະ ແຜນງານແຕ່ປີ 2026-2030 ໃນການສືບຕໍ່ແກ້ໄຂບັນຫາຢາເສບຕິດ, ແຕ່ສະເໜີລັດຖະບານ ຄົ້ນຄວ້າຕື່ມ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດບາງວຽກງານດັ່ງນີ້:

1. ສືບຕໍ່ເຮັດວຽກງານໂຄສະນາສຶກສາອົບຮົມ, ສ້າງຄວາມຮັບຮູ້ເຂົ້າໃຈຕໍ່ຜົນຮ້າຍຢາເສບຕິດ ແລະ ເຜີຍແຜ່ລະບຽບກົດໝາຍ, ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ໃຫ້ທົ່ວສັງຄົມຢ່າງແຂງແຮງດ້ວຍຫຼາຍຮູບການ, ວິທີການ ໂດຍເນັ້ນໃສ່ການຈັດຕັ້ງຮາກຖານບ້ານ, ສຳນັກງານ-ອົງການ, ກົມກອງ, ໂຮງຮຽນ, ຫົວໜ່ວຍທຸລະກິດ ແລະ ສະຖາບັນຄອບຄົວ ເປັນເຈົ້າການດຳເນີນການແກ້ໄຂຢ່າງຈິງຈັງ.

2. ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ກ່ຽວພັນເຖິງການສະກັດກັ້ນ, ປາບປາມຢາເສບຕິດ ໃຫ້ຄົບຖ້ວນ, ຮັດກຸມຕື່ມ ໂດຍສະເພາະແມ່ນນິຕິກຳວ່າດ້ວຍການປະຕິບັດຄຳຕັດສິນ

ອ່ານຕໍ່ໜ້າ 12

# ຜົນສຳເລັດການຈັດຕັ້ງປະຕິບັດວຽກງານຂອງສພຊ



(ສພຊ) - ວັນທີ 19 ພະຈິກຜ່ານມາ, ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ, ທ່ານນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ຂອງສະພາແຫ່ງຊາດ ຊຸດທີ IX ແລະວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດ ຊຸດທີ X ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງສະພາແຫ່ງຊາດຊຸດທີ X ເຊິ່ງໄດ້ຮັບຜົນສຳເລັດຄື:

**1. ດ້ານນິຕິບັນຍັດ**

ພິຈາລະນາຮັບຮອງການສ້າງ ແລະ ປັບປຸງກົດໝາຍ 87 ສະບັບ ໃນນີ້, ສ້າງໃໝ່ 24 ສະບັບ ແລະ ປັບປຸງ 63 ສະບັບ ເທົ່າກັບ 90.62 % ຂອງແຜນການ 5 ປີ, ຮອດປັດຈຸບັນ ມີກົດໝາຍທັງໝົດ 176 ສະບັບ; ສຳລັບປີ 2025 ໄດ້ພິຈາລະນາຮັບຮອງເອົາກົດໝາຍ 13 ສະບັບ ໃນນີ້, ສ້າງໃໝ່ 5 ສະບັບ ແລະ ປັບປຸງ 8 ສະບັບ; ຮັບຄຳສະເໜີຈາກພາກສ່ວນທີ່ກ່ຽວຂ້ອງໃນການຕີຄວາມໝາຍ ແລະ ອະທິບາຍກົດໝາຍ 15 ບັນຫາ ເຊິ່ງສາມາດຕີຄວາມໝາຍ ຫຼື ແກ້ໄຂດ້ວຍຮູບການຕ່າງໆ 14 ບັນຫາ ກວມເອົາ 93.33%; ອອກນິຕິກຳໃຕ້ກົດໝາຍ 80 ສະບັບ ແລະ ໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ 7 ສະບັບ.

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ**

ໄລຍະ 5 ປີຜ່ານມາ ໄດ້ດຳເນີນກອງປະຊຸມສະໄໝສາມັນ ແລະ ສະໄໝວິສາມັນ 12 ຄັ້ງ, ພິຈາລະນາ 196 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 106 ສະບັບ; ປີ 2025 ໄດ້ດຳເນີນກອງປະຊຸມສະໄໝສາມັນ 2 ຄັ້ງ ແລະ ສະໄໝວິສາມັນ 1 ຄັ້ງ ພິຈາລະນາ 26 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 26 ສະບັບ, ອັນພົ້ນເດັ່ນ ໄດ້ພິຈາລະນາຮັບຮອງເອົາການປັບປຸງລັດຖະທຳມະນູນ ສະບັບປີ 2025 ແລະ ຮັບຮອງເອົາການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ; ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ 60 ຄັ້ງ ພິຈາລະນາ 768 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 519 ສະບັບ; ປີ 2025 ດຳເນີນກອງປະຊຸມ ຄປຈສພຊ 12 ຄັ້ງ, ກອງປະຊຸມວິສາມັນ 6 ຄັ້ງ ພິຈາລະນາ 131 ເນື້ອໃນ ແລະ ອອກເປັນມະຕິ 91 ສະບັບ.

**3. ດ້ານການຕິດຕາມກວດກາ**

ໄດ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ຕິດພັນກັບການປະຕິບັດສອງວາລະແຫ່ງຊາດ, ການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຈັດຕັ້ງປະຕິບັດມະຕິກົມການເມືອງສູນກາງພັກ ເລກທີ 112/ກມສພ, ດຳລັດເລກທີ 280/ລບ, ການຜັນຂະຫຍາຍເນື້ອໃນກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດ, ບັນຫາເສັ້ນທາງຄົມມະນາຄົມຂົນສົ່ງ ແລະ ຫົວຂໍ້ອື່ນໆ 172 ຄັ້ງ; ພ້ອມນັ້ນ, ຍັງໄດ້ຕິດຕາມກວດກາຢູ່ກອງປະຊຸມສະພາແຫ່ງຊາດດ້ວຍການຊັກຖາມ 490 ຄຳຊັກຖາມ; ຄະນະປະຈຳສະພາແຫ່ງຊາດ ໄດ້ຕິດຕາມກວດກາໂດຍຜ່ານການດຳເນີນກອງປະຊຸມຮ່ວມລະຫວ່າງ ຄປຈສພຊ ກັບພາກສ່ວນຕ່າງໆ ເພື່ອປຶກສາຫາລື ແລະ ແກ້ໄຂບັນຫາເຄັ່ງຮ້ອນຂອງສັງຄົມ; ໄດ້ຊຸກຍູ້ການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ຢູ່ 6 ກະຊວງ ແລະ ທ້ອງຖິ່ນ 6 ຄັ້ງ ກວມເອົາ 13 ແຂວງ ແລະ ຍັງໄດ້ຮ່ວມໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ 17 ຄັ້ງ ມີຜູ້ເຂົ້າ 1,631 ຄົນ ຍິງ 572 ຄົນ; ຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍ ອອກເປັນນິຕິກຳໃຕ້ກົດໝາຍ 305 ມາດຕາ ກວມເອົາ 87 ກົດໝາຍ, ສາມາດຜັນຂະຫຍາຍແລ້ວ 46 ມາດຕາກວມເອົາ 10 ກົດໝາຍ ແລະ ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 5 ຂົງເຂດຄື: ເສດຖະກິດ-ການເງິນ 4 ສະບັບ, ຍຸຕິທຳ 4 ສະບັບ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ, ວັດທະນະທຳ-ສັງຄົມ 4 ສະບັບ ແລະ ສະພາແຫ່ງຊາດ 4 ສະບັບ; ປີ 2025 ໄດ້ຕິດຕາມກວດກາຫົວຂໍ້ຕ່າງໆ 31 ຄັ້ງ, ນອກນັ້ນ ຍັງໄດ້ຕິດຕາມກວດກາຢູ່ກອງປະຊຸມສພຊດ້ວຍການຊັກຖາມ 36 ຄຳຊັກຖາມ.

ຮັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ 1,700 ສະບັບ ສາມາດພິຈາລະນາ 1.400 ສະບັບ ເທົ່າກັບ 82.35%, ຍັງຄ້າງ 300 ສະບັບ ທີ່ເຂົ້າມາໃນ ສພຊ ຊຸດທີ IX; ປີ 2025 ຮັບຄຳຮ້ອງຂໍຄວາມເປັນທຳ 236 ສະບັບ ແລະ ພິຈາລະນາແກ້ໄຂ 121 ສະບັບ; ຈັດກອງປະຊຸມປຶກສາຫາລືຄຳຮ້ອງທີ່ມີຄວາມຫຍຸ້ງຍາກ ກັບພາກສ່ວນກ່ຽວຂ້ອງ 7 ຄັ້ງ, ສາມາດແກ້ໄຂ 28 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ 424 ເທື່ອຄັ້ງ; ຮັບຄຳຮ້ອງ, ຄຳສະເໜີຂອງປະຊາຊົນ ຜ່ານໂທລະສັບສາຍດ່ວນ (156) 2,708 ເລື່ອງ.

4. ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

- ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ; ໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ 19 ຄັ້ງ, ມີຜູ້ເຂົ້າຮ່ວມ 7,375 ຄົນ ຍິງ 2,873 ຄົນ. ປີ 2025 ປະຕິບັດໄດ້ 9 ຄັ້ງ, ມີຜູ້ເຂົ້າຮ່ວມ 744 ຄົນ ຍິງ 200 ຄົນ.

-ປະກອບຄຳເຫັນຢູ່ກອງປະຊຸມ ສພຊ 5,039 ເທື່ອຄົນ ຍິງ 995 ເທື່ອຄົນ.

- ພົບປະປະຊາຊົນ ແລະ

ອ່ານຕໍ່ໜ້າ 12

# ການແກ້ໄຂຜົນການກວດກາ



(ສພຊ) - ທ່ານ ປອ. ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ເມື່ອວັນທີ 14 ພະຈິກຜ່ານມາ ກ່ຽວກັບການແກ້ໄຂຜົນການກວດກາ ເຊິ່ງຕະຫຼອດໄລຍະ 5 ປີຜ່ານມາ, ອົງການກວດກາແຫ່ງລັດ ໄດ້ເອົາໃຈໃສ່ຕິດຕາມ, ຊຸກຍູ້ການແກ້ໄຂຜົນຂອງການກວດກາ, ແກ້ໄຂຜົນການກວດກາຕາມມະຕິຂອງສະພາແຫ່ງຊາດ, ແກ້ໄຂຕາມແຈ້ງການເລກທີ 130/ຫສນຍ ແລະ ຕິດຕາມການເປີດບັນຊີຂອງບັນດາບໍລິສັດຂຸດຄົ້ນແຮ່ແບບທົດລອງ 30 ເປົ້າໝາຍ ລວມ 1,315 ໂຄງການ ໃນນີ້, ແກ້ໄຂໄດ້ຢ່າງຂາດຕົວ 2 ເປົ້າໝາຍ ລະອຽດດັ່ງນີ້:

ການແກ້ໄຂຜົນການກວດກາ ໂດຍອົງການກວດກາແຫ່ງລັດເປັນຜູ້ຕົກລົງ ມີ 12 ເປົ້າໝາຍຄື: 1. ສຳເລັດການຊົດເຊີຍຜົນກະທົບຈາກເຂື່ອນໄຟຟ້ານ້ຳອ້າວແຕກພັງ, 2. ສຳເລັດການແກ້ໄຂພາຫະນະລົດປ້າຍລັດທີ່ບຸກຄົນນຳໃຊ້ ຢູ່ສະຫະພັນນັກຮົບເກົ່າແຫ່ງຊາດ, 3. ໂຄງການກໍ່ສ້າງທາງ 7 ເສັ້ນ ເທດສະບານເມືອງທ່າແຂກ ແຂວງຄຳມ່ວນ, 4. ໂຄງການບໍ່ມີຕົວຕົນຢູ່ແຂວງອຸດົມໄຊ, 5. ການຍັກຍອກຊັບຂອງລັດ ຢູ່ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ, 6. ການປ່ອຍເງິນກູ້ຂອງລັດຖະບານ ຜ່ານ 2 ທະນາຄານທຸລະກິດ ໃຫ້ກັບ 31 ຫົວໜ່ວຍທຸລະກິດ, 7. ການປະຕິບັດໜ້າທີ່ຂອງກອງຈໍລະຈອນທາງອາກາດລາວ, 8. ການປະຕິບັດໜ້າທີ່ຂອງພະນັກງານລັດວິສາຫະກິດໄປສະນີລາວ, 9. ພະນັກງານການເງິນຂອງອົງການກວດກາແຫ່ງລັດ ທີ່ຍັກຍອກຊັບຂອງລັດທີ່ຕົນເປັນຜູ້ຄຸ້ມຄອງຮັກສາ, 10. ຜົນລະເມືອງທີ່ສໍ້ໂກງຊັບຂອງລັດ, 11. ບຸກຄົນທີ່ມີພຶດຕິກຳລະເມີດກົດໝາຍຂອງລັດ ແລະ ສໍ້ລາດບັງຫຼວງໃນໄລຍະການແຜ່ລະບາດພະຍາດໂຄວິດ-19 ຢູ່ແຂວງຫຼວງນ້ຳທາ, 12. ການບຸກລຸກທີ່ດິນລັດ, ເນື້ອທີ່ເຂດປ່າຜະລິດ, ປ່າປ້ອງກັນ ແລະ ການຕັດໄມ້ ຢູ່ແຂວງອັດຕະປື; ບັນດາເປົ້າໝາຍໄດ້ສ້າງຜົນເສຍຫາຍ 558.09 ຕື້ກີບ, 1.53 ລ້ານໂດລາ, 2 ແສນບາດ ແລະ 7.70 ລ້ານຢວນ; ສາມາດເກັບກູ້ຜົນເສຍຫາຍ 333.68 ຕື້ກີບ, 44 ພັນກວ່າໂດລາ, 2 ແສນບາດ, 4.50 ລ້ານຢວນ, ທີ່ດິນ 6 ຕອນ, ບ້ານພັກ 2 ຫຼັງ, ລົດໃຫຍ່ 6 ຄັນ, ລົດລາກ 2 ຄັນ, ທາງລາກ 2 ທາງ ແລະ ຄຳ 44 ບາດ ຮິບເປັນຂອງລັດ ແລະ ຍັງຄ້າງ 10 ເປົ້າໝາຍ ມູນຄ່າຜົນເສຍຫາຍ 224.94 ຕື້ກີບ, 1.24 ລ້ານໂດລາ ແລະ 3.19 ລ້ານຢວນ.

ການແກ້ໄຂຜົນການກວດກາຕາມມະຕິຂອງສະພາແຫ່ງຊາດ ມີທັງໝົດ 11 ເປົ້າໝາຍ ລວມມີ 24 ພາກສ່ວນ ແລະ 247 ໂຄງການ ຄື: 1. ການຂາຍໄມ້ບໍ່ຜ່ານການປະມູນ ແລະ ຂາຍຫຼຸດລາຄາກາງຂອງກະຊວງອຸດສາຫະກຳ ແລະ ການຄ້າ ຈຳນວນ 9 ພາກສ່ວນ; 2. ໜີ້ຕ້ອງຮັບປີ 2018 ຂອງ 8 ກະຊວງ; 3. ການຫັກລົບມູນຄ່າໜ້າວຽກໂຄງການທີ່ບໍ່ໄດ້ຈັດຕັ້ງປະຕິບັດ, ມູນຄ່າຄິດໄລ່ບໍ່ຖືກລະບຽບການ ແລະ ດັດແກ້ມູນຄ່າເຊັນສັນຍາຫຼຸດ ສພຊ ຮັບຮອງ 78 ໂຄງການ; 4. ໂຄງການນອກແຜນທີ່ ສພຊ ເຫັນດີຮັບຮອງສະເໜີຄົ້ນຄວ້າພິຈາລະນາເຂົ້າແຜນ 95 ໂຄງການ; 5. ໂຄງການທີ່ມີມູນຄ່າສູງກວ່າ 20% ທຽບໃສ່ລາຄາຫົວໜ່ວຍຂອງກະຊວງກ່ຽວຂ້ອງ 61 ໂຄງການ; 6. ໂຄງການທີ່ຊຳລະເງິນເກີນໜ້າວຽກປະຕິບັດຕົວຈິງ 4 ໂຄງການ; 7. ການເຊົ່າ-ສຳປະທານທີ່ດິນໂດຍບໍ່ມີສັນຍາ, ການຊຳລະຄ່າເຊົ່າສຳປະທານທີ່ດິນແລະການວາງເງິນຄ້ຳປະກັນສັນຍາຢູ່ 5 ແຂວງ; 8. ການໄລ່ລຽງຄ່າຊັບພະຍາກອນທຳມະຊາດ ໂຄງການກໍ່ສ້າງເສັ້ນທາງຢູ່ແຂວງຊຽງຂວາງ; 9. ການຈົດທະບຽນຊັບສິນໂຄງການກໍ່ສ້າງຂົວ-ທາງ 13 ໂຄງການ; 10. ການຫັນສິດນຳໃຊ້ທີ່ດິນຕະຫຼາດທາດຫຼວງ; 11. ການແກ້ໄຂຂອງ 5 ກົມກະຊວງການເງິນ (ກົມພາສີໄດ້ແກ້ໄຂແລ້ວ, ຍັງຄ້າງ 4 ກົມ).

ມາຮອດປັດຈຸບັນ, ສາມາດເກັບກູ້ ແລະ ແກ້ໄຂ ຄື: 1. ເກັບກູ້ເງິນແລະຄ່າພັນທະຕ່າງໆໄດ້ 32.65 ຕື້ກີບ, 79 ພັນກວ່າໂດລາ ແລະ 3,860 ບາດ; 2. ຫັກລົບມູນຄ່າໂຄງການອອກຈາກສາລະບານແຜນການລົງທຶນຂອງລັດ 31 ໂຄງການ, ມູນຄ່າຫັກລົບ 171.24 ຕື້ກີບ; 3. ແກ້ໄຂໂຄງການນອກແຜນບັນຈຸເຂົ້າແຜນ 86 ໂຄງການ. ສັງລວມແລ້ວ, ໃນ 11 ເປົ້າໝາຍນີ້ ຍັງບໍ່ສາມາດແກ້ໄຂໄດ້ສຳເລັດຂາດຕົວເທື່ອ.

ການແກ້ໄຂຜົນຂອງການກວດກາໂຄງການລົງທຶນຂອງລັດຕາມແຈ້ງການ 130/ຫສນຍ ແລະ ການຂຸດຄົ້ນ, ສົ່ງອອກແຮ່ທາດ (ແບບທົດລອງ) ມີ 7 ເປົ້າໝາຍ ລວມ 1,068 ໂຄງການດັ່ງນີ້:

1. ການຫັກລົບມູນຄ່າໜ້າວຽກບໍ່ໄດ້ປະຕິບັດ, ມູນຄ່າຄິດໄລ່ບໍ່ຖືກລະບຽບການ ແລະ ດັດແກ້ມູນຄ່າເຊັນສັນຍາຫຼຸດ ສພຊ ຮັບຮອງ 796 ໂຄງການ ມູນຄ່າ 3,942 ຕື້ກີບ, ສາມາດຫັກລົບໄດ້ 362 ໂຄງການ ມູນຄ່າ 2,564 ຕື້ກີບ;

2. ໂຄງການນອກແຜນສະເໜີຄົ້ນຄວ້າພິຈາລະນາເອົາເຂົ້າແຜນການລົງທຶນຂອງລັດ 82 ໂຄງການ ມູນຄ່າ 973.92 ຕື້ກີບ, ສາມາດບັນຈຸເຂົ້າແຜນແລ້ວ 42 ໂຄງການ ມູນຄ່າ 320.39 ຕື້ກີບ;

3. ການຕໍ່ລອງໂຄງການທີ່ມີມູນຄ່າສູງກວ່າ 20% ທັງໝົດ 183 ໂຄງການ ມູນຄ່າຜິດດ່ຽງ 3,305 ຕື້ກີບ, ມາຮອດປັດຈຸບັນ ບໍ່ສາມາດຕໍ່ລອງ ແລະ ແກ້ໄຂໄດ້;

4. ໂຄງການທີ່ຊຳລະເງິນເກີນໜ້າວຽກປະຕິບັດຕົວຈິງ 10 ໂຄງການ ມູນຄ່າ 112.16 ຕື້ກີບ, ແກ້ໄຂສຳເລັດ 7 ໂຄງການ ມູນຄ່າ 108.79 ຕື້ກີບ;

5. ການປະຕິບັດວິໄນຕໍ່ພະນັກງານທີ່ຢັ້ງຢືນບໍລິມາດວຽກບໍ່ຖືກກັບຕົວຈິງ ແລະ ການກູ້ຢືມເງິນຈາກທະນາຄານ ມາຊຳລະໃຫ້ໂຄງການ ຢູ່ແຂວງໄຊຍະບູລີ ແລະ ແຂວງເຊກອງ, ມີພະນັກງານ 32 ຄົນ (ຍິງ 1 ຄົນ) ປະຕິບັດວິໄນສຳເລັດແລ້ວ;

6. ໂຄງການທີ່ຍັງຄ້າງມອບຄ່າອາກອນ 10%, ຄ່າຈົດທະບຽນຊັບສິນ ແລະ ຄ່າຊັບພະຍາກອນທຳມະຊາດ ຈຳນວນ 5 ຮ້ອຍໂຄງການ ມູນຄ່າ 351.30 ຕື້ກີບ ແລະ 1.60 ລ້ານໂດລາ;

7. ການເປີດບັນຊີທະນາຄານຂອງ 76 ບໍລິສັດ ທີ່ຂຸດຄົ້ນ ແລະ ສົ່ງອອກແຮ່ທາດ (ແບບທົດລອງ) ເຊິ່ງເປີດບັນຊີແລ້ວ 54 ບໍລິສັດ, ໃນນີ້: ຍັງ 1 ບໍລິສັດ ມອບບໍ່ຄົບຖ້ວນ ແລະ ອີກ 1 ບໍລິສັດ ຍັງບໍ່ໄດ້ມອບ ລວມເງິນ 3.5 ລ້ານໂດລາ ແລະ ຍັງບໍ່ເປີດບັນຊີ 22 ບໍລິສັດ.

# ກອງປະຊຸມສະໄໝສາມັນເທື່ອທີ 10 ອອກມະຕິ 8 ສະບັບ



(ສພຊ) - ຕອນແລງວັນສຸກທີ 21 ພະຈິກນີ້, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມຄັ້ງນີ້ ໄຂຂຶ້ນໃນວັນວັນທີ 10 ຫາ 21 ພະຈິກ 2025 ດຳເນີນເປັນເວລາ 10 ວັນ ໂດຍໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ 14 ເນື້ອໃນ ແລະ ຮັບຮອງອອກເປັນມະຕິ 8 ສະບັບດັ່ງນີ້:

1. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ 2025; ແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະຈຳປີ 2025, ແຜນເງິນຕາ ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026, ບົດລາຍງານການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍວິຊາການຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ປີ 2025 ແລະ ເງິນເກີນແຜນປີ 2024.

2. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

3. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງຕໍ່ໜ້າ.

4.) ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2023 ຂອງອົງການກວດກາແຫ່ງລັດ.

5. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ.

6. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງສານປະຊາຊົນສູງສຸດ.

7. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026 ອົງການໄອຍະການປະຊາຊົນສູງສຸດ

8. ມະຕິສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025). ປະຈຳປີ 2025 ຂອງສະພາແຫ່ງຊາດຊຸດທີ IX ແລະ ແຜນການເຄື່ອນໄຫວວຽກງານຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X.

ພ້ອມນັ້ນ, ຍັງໄດ້ຮັບຟັງການເຜີຍແຜ່ມູນເຊື້ອແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ ຄົບຮອບ 50 ປີ; ບົດລາຍງານການກະກຽມວຽກງານເລືອກຕັ້ງ; ມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ຈັດພິທີຍ້ອງຍໍຜົນງານ ໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະພາປະຊາຊົນຂັ້ນແຂວງ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX, ມອບຫຼຽນກາລະນຶກ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດ ແລະ ຫຼຽນກາລະນຶກ 5 ປີ ເພື່ອຢັ້ງຢືນການສຳເລັດໜ້າທີ່ການເປັນສະມາຊິກສະພາແຫ່ງຊາດ ຊຸດທີ IX.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຍັງກ່າວອີກວ່າ: ໄລຍະດຳເນີນກອງປະຊຸມ ໄດ້ມີປະຊາຊົນສົ່ງຄຳຄິດຄຳເຫັນຜ່ານໂທລະສັບສາຍດ່ວນ (156) ລວມທັງໝົດ 989 ສາຍ, 525 ເລື່ອງ ເຊິ່ງພົວພັນເຖິງການພັດທະນາເສດຖະກິດ-ສັງຄົມ, ການຄຸ້ມຄອງບໍລິຫານລັດ, ການຊົດເຊີຍຜົນກະທົບຈາກໂຄງການພັດທະນາຕ່າງໆ; ຕໍ່ຄຳຄິດເຫັນທີ່ສົ່ງມານັ້ນ, ກອງເລຂາກອງປະຊຸມ ຈະໄດ້ສັງລວມ ແລະ ມອບໃຫ້ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ເພື່ອປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການ.



# ປະທານ ກຜງສ ຮັບການຢ້ຽມຂ່ຳນັບ ຂອງຜູ້ຈັດການຝ່າຍຈັດຊື້-ຈັດຈ້າງ WB



(ສພຊ) - ເພື່ອເສີມສ້າງສາຍພົວພັນຮ່ວມມື ແລະ ແລກປ່ຽນດ້ານວິຊາການກ່ຽວກັບການປະຕິຮູບການຈັດຊື້-ຈັດຈ້າງຂອງລັດ ໂດຍເນັ້ນໃສ່ການຫັນເປັນດີຈິຕອນໃນການຈັດຊື້-ຈັດຈ້າງ, ລວມທັງການນໍາໃຊ້ລະບົບຈັດຊື້-ຈັດຈ້າງເອເລັກໂຕຣນິກ (E-procurement) ເຂົ້າໃນ ສປປລາວ; ຕອນບ່າຍວັນທີ 18 ພະຈິກຜ່ານມາ, ທ່ານ ປອ. ລີເບີ ລີບົວປາວ ປະທານກໍາມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໄດ້ຕ້ອນຮັບການຢ້ຽມຂ່ຳນັບຂອງທ່ານ ດີໂອເມເດສ ເບີໂຣອາ ຜູ້ຈັດການຝ່າຍຈັດຊື້-ຈັດຈ້າງຂອງທະນາຄານໂລກ (WB) ປະຈໍາພາກພື້ນອາຊີຕາເວັນອອກແລະອາຊີປາຊີຟິກ (EAP) ພ້ອມດ້ວຍຄະນະ.

ຕາງໜ້າຄະນະຈາກທະນາຄານໂລກ ໄດ້ລາຍງານການສະໜັບສະໜູນຂອງທະນາຄານໂລກຕໍ່ລັດຖະບານ ໂດຍສະເພາະກະຊວງການເງິນ ໃນວຽກງານການຄຸ້ມຄອງໂຄງການ ແລະ ການປັບປຸງ ແລະ ປະຕິຮູບ ໃນການຍົກລະດັບການຈັດຊື້-ຈັດຈ້າງ ເຊິ່ງໄລຍະຜ່ານມາ ໄດ້ໃຫ້ການສະໜັບສະໜູນໂຄງການການຄຸ້ມຄອງການເງິນພາກລັດ (ນັບແຕ່ປີ 2018) ໂດຍການປະຕິຮູບການຈັດຊື້-ຈັດຈ້າງຂອງລັດຖະບານລາວ ໄລຍະທີ 3 (2023-2027) ເຊິ່ງສຸມໃສ່ການຊ່ວຍເຫຼືອດ້ານວິຊາການ (TA) ໃນ 5 ຂົງເຂດຕົ້ນຕໍຄື: 1) ກະກຽມສໍາລັບການພັດທະນາລະບົບການຈັດຊື້-ຈັດຈ້າງເອເລັກໂຕຣນິກ ໃນ ສປປລາວ, 2) ການນໍາໃຊ້ຂອບສັນຍາ (Framework Agreements) ພ້ອມໂຄງການທົດລອງ 3 ແຫ່ງສໍາລັບບັນດາກະຊວງ, 3) ຍົກລະດັບດ້ານວິຊາຊີບໃນການດໍາເນີນການປະເມີນຄວາມຕ້ອງການເຝິກອົບຮົມ (TNA) ສໍາລັບຂອບເຂດຄວາມສາມາດ (Competency Framework) ແລະ ການພັດທະນາການຈັດຕັ້ງປະຕິບັດໂຄງການເຝິກອົບຮົມການຈັດຊື້-ຈັດຈ້າງຂັ້ນສູນກາງ ແລະທ້ອງຖິ່ນ, 4) ການຄຸ້ມຄອງຄໍາຮ້ອງທຸກ ໂດຍການສ້າງຕັ້ງຄູ່ມື ແລະ ລະບົບການຄຸ້ມຄອງຄໍາຮ້ອງທຸກ, 5) ການສະໜອງຊັບພະຍາກອນດ້ານວິຊາການສໍາລັບການພັດທະນາກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ກ່ຽວກັບການຈັດຊື້-ຈັດຈ້າງ; ພ້ອມນີ້, ໄດ້ດໍາເນີນການສໍາຫຼວດຂົງເຂດການຮ່ວມມືໃນອະນາຄົດ ໂດຍສະເພາະແຜນການຂອງລັດຖະບານຄື: ການປັບປຸງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບປີ 2017 ແລະການຫັນເປັນດີຈິຕອນໃນວຽກງານການຄຸ້ມຄອງການເງິນພາກລັດ (PFM).

ທ່ານ ປອ. ລີເບີ ລີບົວປາວ ໄດ້ຕີລາຄາສູງ ແລະ ສະແດງຄວາມຂອບໃຈຢ່າງສູງ ຕໍ່ການສະໜັບສະໜູນ ແລະ ໃຫ້ການຊ່ວຍເຫຼືອຂອງທະນາຄານໂລກໃນໄລຍະຜ່ານມາແລະໃນຕໍ່ໜ້າ ທັງຍົກໃຫ້ເຫັນຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເຊິ່ງຜ່ານການຕິດຕາມກວດກາການຈັດຕັ້ງປະຕິບັດດ້ານງົບປະມານສໍາລັບການຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ ໂດຍສະເພາະການສ້ອມແປງເສັ້ນທາງຍັງຊັກຊ້າ, ບາງໂຄງການຍັງປະຕິບັດບໍ່ສອດຄ່ອງຕາມກົດໝາຍ ເປັນຕົ້ນ: ບໍ່ໄດ້ຈັດການປະມູນ, ສົມທຽບລາຄາແລະປະເມີນຜົນໄດ້ຮັບເຮັດໃຫ້ໂຄງການບໍ່ມີປະສິດທິພາບເທົ່າທີ່ຄວນ; ພ້ອມນັ້ນ, ຍັງເຫັນດີໃຫ້ສືບຕໍ່ປະສານສົມທົບ ແລະ ລົງເລິກປຶກສາຫາລືດ້ານວິຊາການ ກ່ຽວກັບວຽກງານຈັດຊື້-ຈັດຈ້າງ, ການແລກປ່ຽນບົດຮຽນ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາການຂອງກໍາມາທິການ ກຜງສ.

# ບາງຄໍາເຫັນຂອງສູນກາງແນວລາວ ຕໍ່ ສພຊ

(ສພຊ) - ວັນທີ 19 ພະຈິກຜ່ານມາ ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ພາຍຫຼັງທ່ານ ນາງ ອໍາໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໄດ້ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈໍາປີ 2025ຂອງສະພາແຫ່ງຊາດຊຸດທີ IX ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ຮ່າງແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈໍາປີ 2026 ຂອງສະພາແຫ່ງຊາດ ຊຸດທີ X; ທ່ານ ມອນໄຊ ລາວມົວຊື່ງ ຮອງປະທານສູນກາງແນວລາວສ້າງຊາດ ໄດ້ປະກອບຄໍາເຫັນຕໍ່ບົດລາຍງານດັ່ງກ່າວ ເຊິ່ງມີບາງບັນຫາທີ່ສພຊຈະຕ້ອງໄດ້ເອົາໃຈໃສ່ຄື:



1. ການຮັບຮອງນິຕິກໍາ: ເພີ່ມທະວີການຄົ້ນຄວ້າໃຫ້ລະອຽດ, ເລິກເຊິ່ງ ແລະ ຊັດເຈນຕື່ມ ກ່ອນທີ່ຈະຮັບຮອງ ເປັນຕົ້ນ: ການປັບປຸງລາຄາກະແສໄຟຟ້າ, ໂຄງການທາງລົດເມດ່ວນ (BRT)...

2. ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ກໍຄືນິຕິກໍາໃຕ້ກົດໝາຍ ບາງຈຸດຍັງບໍ່ທັນແຂງແຮງ ເປັນຕົ້ນ: ບັນຫາບໍ່ແຮ່, ພື້ນຖານໂຄງລ່າງ, ຢາເສບຕິດ, ການຂາດແຄນແຮງງານ, ການຕົວະຍົວະຫຼອກລວງຜ່ານສື່ອອນລາຍ ແລະ ອື່ນໆ ຂໍໃຫ້ຕິດຕາມກວດກາ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງເຂັ້ມງວດທາງດ້ານການບັງຄັບໃຊ້ ແລະ ປະຕິບັດກົດໝາຍ.

3. ຕໍ່ກັບສະມາຊິກສະພາ: ການເຮັດບົດບາດໃນຖານະເປັນຕົວແທນຂອງປະຊາຊົນ ບາງທ່ານຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເຊັ່ນ: ສະມາຊິກສະພາແຫ່ງຊາດບາງທ່ານການປະກອບຄໍາຄິດເຫັນຍັງບໍ່ທັນແຂງແຮງ; ສະມາຊິກສະພາປະຊາຊົນຂັ້ນແຂວງປະຈໍາເຂດເລືອກຕັ້ງເມືອງການລົງສູ່ຮາກຖານຍັງບໍ່ທັນແຂງແຮງ, ຄວາມສາມາດໃນການນໍາເອົາແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ລົງໄປເຜີຍແຜ່ເຊື່ອມຊຶມຍັງຈໍາກັດ.

ສໍາລັບແຜນການ 5 ປີ (2026-2030) ແລະ ປະຈໍາປີ 2026ຂອງສະພາແຫ່ງຊາດຊຸດທີ X.

ທິດທາງລວມ: ໃຫ້ເພີ່ມທະວີວຽກງານລົງຮາກຖານ; ຕິດຕາມກວດກາ, ຊຸກຍູ້ການແກ້ໄຂຄໍາຮ້ອງ ແລະ ຄໍາສະເໜີຂອງປະຊາຊົນ ພ້ອມທັງລາຍງານຜົນການແກ້ໄຂ.

ດ້ານນິຕິບັນຍັດ: ຕິດຕາມກວດກາ, ຊຸກຍູ້ການສ້າງ ແລະ ການປັບປຸງກົດໝາຍ ໃຫ້ຖືກຕ້ອງຕາມບາດກ້າວ, ຂັ້ນຕອນທີ່ໄດ້ກໍານົດໃນກົດໝາຍວ່າດ້ວຍການສ້າງນິຕິກໍາ ແລະ ສອດຄ່ອງກັບສະພາບຕົວຈິງ.

ການຕົກລົງບັນຫາສໍາຄັນຂອງຊາດ: ຕິດຕາມກວດກາ, ຊຸກຍູ້ໂຄງການລະດັບຊາດເຊັ່ນ: ໂຄງການທາງດ່ວນວັງວຽງ-ບໍ່ເຕັ່ນ, ໂຄງການທາງດ່ວນວຽງຈັນ-ຮ່າໂນ້ຍ, ໂຄງການກໍ່ສ້າງທາງລົດໄຟວຽງຈັນ-ຄໍາມ່ວນ-ທ່າເຮືອຫວຸງອ່າງ ສສ. ຫວຽດນາມ ແລະ ອື່ນໆ; ການຜະລິດກະສິກໍາຕາມແລວທາງລົດໄຟ, ແລວທາງດ່ວນ ເພື່ອຜະລິດສິນຄ້າສົ່ງອອກ; ໂຄງການສ້ອມແປງເສັ້ນທາງຫຼວງແຫ່ງຊາດ ເລກທີ 13.

ພ້ອມກັນນັ້ນ, ຂໍໃຫ້ເອົາໃຈໃສ່ດ້ານຄຸນນະພາບຂອງບຸກຄະລາກອນທີ່ຈະລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາ.

# ສະມາຄົມມິດຕະພາບ ລາວ-ມຽນມາ ພົບປະສອງຝ່າຍ



(ສພຊ) - ໂດຍຕອບສະໜອງຕາມການເຊີນຂອງປະທານສະມາຄົມມິດຕະພາບລາວ-ມຽນມາ, ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ນໍາໂດຍທ່ານ ພົຈວ. ວິນ ໝ່ອງ (Win Maung) ປະທານສະມາຄົມມິດຕະພາບ ມຽນມາ-ລາວ ພ້ອມດ້ວຍຄະນະ ໄດ້ເດີນທາງມາຢ້ຽມຢາມ ແລະ ເຮັດວຽກກັບສະມາຄົມມິດຕະພາບ ລາວ-ມຽນມາ ຢູ່ ສປປລາວ ແຕ່ວັນທີ 16-20 ພະຈິກ 2025.

ວັນທີ 17 ພະຈິກ, ໄດ້ມີກອງປະຊຸມພົບປະຄັ້ງທໍາອິດນັບຕັ້ງແຕ່ສອງສະມາຄົມສ້າງຕັ້ງຂຶ້ນ, ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກໍາມາທິການການຕ່າງປະເທດຂອງສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ມຽນມາ ແລະ ທ່ານ ພົຈວ. ວິນ ໝ່ອງ ໂດຍການເຂົ້າຮ່ວມຂອງທ່ານ ອອງ ໂກ (Aung Ko) ເອກອັກຄະລັດຖະທູດວິສາມັນຜູ້ມີອໍານາດເຕັມແຫ່ງ ສສ.ມຽນມາ ປະຈໍາ ສປປລາວ; ກອງປະຊຸມໄດ້ທົບທວນການຈັດຕັ້ງປະຕິບັດການພົວພັນຮ່ວມມື (ການທູດປະຊາຊົນ) ໃນໄລຍະຜ່ານມາແລະປຶກສາຫາລືວາງທິດທາງແຜນການຮ່ວມມືໃນຕໍ່ໜ້າ ລະຫວ່າງສະມາຄົມມິດຕະພາບ ລາວ-ມຽນມາ, ມຽນມາ-ລາວ ເຊິ່ງສອງສະມາຄົມໄດ້ເປັນໃຈກາງປະສານງານ, ຊຸກຍູ້, ໂຄສະນາເຜີຍແຜ່ສາຍພົວພັນ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ໃຫ້ປະຊາຊົນສອງຊາດໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ເພື່ອສ້າງຄວາມຮັກແພງ, ຄວາມໄວ້ເນື້ອເຊື່ອໃຈ ແລະ ສ້າງກິດຈະກໍາຮ່ວມກັນເພື່ອປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງສປປລາວແລະສສ.ມຽນມາ ໃຫ້ນັບມື້ໄດ້ຮັບການພັດທະນາຂຶ້ນເລື້ອຍໆ.

ການມາຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ຍັງໄດ້ເຂົ້າຢ້ຽມຂ່ຳນັບທ່ານ ວາລະໄຊ ເລັ່ງສະຫວັດຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານໄດ້ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ເຊິ່ງເປັນນິມິດໝາຍສໍາຄັນຕໍ່ການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືອັນດີງາມລະຫວ່າງສອງປະເທດ ແລະ ປະຊາຊົນສອງຊາດ ທັງເປັນການເປີດກວ້າງການພົວພັນຮ່ວມມື, ຊຸກຍູ້ການພົວພັນການທູດປະຊາຊົນ ເພື່ອຮັດແໜ້ນສາຍພົວພັນມິດຕະພາບ ແລະ ສ້າງຄວາມເຂົ້າອົກເຂົ້າໃຈລະຫວ່າງປະຊາຊົນສອງຊາດ ໂດຍສະເພາະສອງສະມາຄົມມິດຕະພາບ ໃຫ້ມີບາດກ້າວໃໝ່; ນອກນັ້ນ, ຍັງໄດ້ແຈ້ງສະພາບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ ໃຫ້ຄະນະຜູ້ແທນຊາບ.

ທ່ານ ພົຈວ. ວິນ ໝ່ອງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ອໍານວຍຄວາມສະດວກໃຫ້ແກ່ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ທັງໄດ້ລາຍງານການເຄື່ອນໄຫວອັນພົ້ນເດັ່ນຂອງສະມາຄົມມິດຕະພາບ ມຽນມາ-ລາວ ແລະ ຍິນດີຈະສືບຕໍ່ຮ່ວມກັບສະມາຄົມມິດຕະພາບ ລາວ-ມຽນມາ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບໃຫ້ນັບມື້ນັບດີຂຶ້ນ.

ນອກຈາກນີ້, ຄະນະຜູ້ແທນສະມາຄົມມິດຕະພາບ ມຽນມາ-ລາວ ຍັງໄດ້ຢ້ຽມຢາມສະຖານທີ່ທ່ອງທ່ຽວທາງປະຫວັດສາດແລະວັດທະນະທໍາຈໍານວນໜຶ່ງ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງຫຼວງພະບາງ.

# ປັດຈຸບັນ ອອກໃບຕາດິນ 75.5% ຂອງສຳມະໂນຕອນດິນທັງໝົດ



(ສພຊ)-ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 13 ພະຈິກຜ່ານມາ, ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ໄດ້ຊີ້ແຈງຕໍ່ບາງຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດກ່ຽວກັບວຽກງານຄຸ້ມຄອງ ແລະ ຂຶ້ນທະບຽນອອກໃບຕາດິນ ວ່າ: ທົ່ວປະເທດມີສຳມະໂນຕອນດິນທັງໝົດ 3,000,632 ຕອນ, ຮອດປັດຈຸບັນ ສາມາດອອກໃບຕາດິນ 2,266,414 ຕອນ ເທົ່າກັບ 75.5% ຂອງສຳມະໂນຕອນດິນທັງໝົດ ໃນນັ້ນ, ມີຂໍ້ມູນຕອນດິນດີຈີຕອນທີ່ຢູ່ໃນຖານຂໍ້ມູນ ລາວ ແລນ ເຣັກ (Lao Land Reg) 1,516,921 ຕອນ. ສະເພາະ 10 ເດືອນ ປີ 2025 ໄດ້ອອກໃບຕາດິນ 136,456 ຕອນ ເທົ່າກັບ 45.5% ແລະ ຄາດຄະເນໝົດປີ ຈະໄດ້ປະມານ 219,906 ຕອນ ເທົ່າກັບ 73.3% ຂອງແຜນການທີ່ສະພາແຫ່ງຊາດຮັບຮອງ (300,000 ຕອນ); ນອກນີ້, ສຳເລັດການຂຶ້ນບັນຊີດິນລັດທັງໝົດຂອງ 11 ກະຊວງ (ຂັ້ນກະຊວງ) 166 ຕອນ ເນື້ອທີ່ 999.3 ເຮັກຕາ (ຮຕ) ແລະ ຈະສືບຕໍ່ຂຶ້ນທະບຽນອອກໃບຕາດິນລັດ ໃຫ້ກັບຂະແໜງການທີ່ໄດ້ນຳໃຊ້ທີ່ດິນຂອງລັດ ທີ່ບໍ່ທັນມີໃບຕາດິນລັດ ໃຫ້ສຳເລັດ (ຂັ້ນແຂວງ, ເມືອງ ແລະ ບ້ານ) ໃນຂອບເຂດທົ່ວປະເທດ.

ການແກ້ໄຂບັນດາໂຄງການເຊົ່າ, ສຳປະທານທີ່ດິນຂອງລັດ ເພື່ອດຳເນີນກິດຈະການຕ່າງໆທີ່ບໍ່ມີປະສິດທິພາບ ແລະ ປະສິດທິຜົນ, ໂຄງການທີ່ບໍ່ປະຕິບັດຕາມກົດໝາຍ ແລະ ສັນຍາ: ປັດຈຸບັນ, ໄດ້ສຳເລັດການກວດກາຕົວຈິງ, ໃນຕົ້ນປີ 2025 ສາມາດຈັດຕັ້ງປະຕິບັດໄດ້ 17 ແຂວງ ສຳລັບນະຄອນຫຼວງວຽງຈັນ ແມ່ນຍັງຢູ່ໃນໄລຍະດຳເນີນການ; ໃນຈຳນວນ 17 ແຂວງ ມີໂຄງການລົງທຶນ 2,547 ໂຄງການ ທີ່ນຳໃຊ້ຊັບພະຍາກອນດິນດ້ວຍຮູບການເຊົ່າ-ສຳປະທານດິນລັດ ໃນນັ້ນ, ຂັ້ນສູນກາງອະນຸມັດ 582 ໂຄງການ, ຂັ້ນແຂວງອະນຸມັດ 1,571 ໂຄງການແລະຂັ້ນເມືອງອະນຸມັດ 394 ໂຄງການ, ມີເນື້ອທີ່ 3,234,012 ຮຕ.

# ຮອງປະທານ ກຜງສ ຕ້ອນຮັບຄະນະຜູ້ແທນ IMF



(ສພຊ) - ຕອນບ່າຍວັນທີ 19 ພະຈິກຜ່ານມາ, ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ໄດ້ຕ້ອນຮັບການເຂົ້າພົບປະຂອງທ່ານ ນາງ ອັງຄະນາ ບາເນີຈີ ຫົວໜ້າຄະນະຊ່ຽວຊານຂອງອົງການກອງທຶນການເງິນລະຫວ່າງປະເທດ (IMF) ພ້ອມດ້ວຍຄະນະ ໂດຍມີຈຸດປະສົງເພື່ອປຶກສາຫາລື ແລະ ລາຍງານກ່ຽວກັບຜົນການປະເມີນເສດຖະກິດມະຫາພາກຂອງ ສປປ ລາວ ຕາມພັນທະຂອງປະເທດສະມາຊິກຕາມມາດຕາ IV ເຊິ່ງທ່ານຮອງປະທານ ກຜງສ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມ ແລະ ເຮັດວຽກຂອງຄະນະຢູ່ ສປປລາວ ຄັ້ງນີ້.

ທ່ານ ນາງ ອັງຄະນາ ບາເນີຈີ ໄດ້ລາຍງານຜົນການປະເມີນເສດຖະກິດມະຫາພາກຂອງ ສປປລາວ ໂດຍໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ສາມາດຮັກສາໄດ້ສະຖຽນລະພາບດ້ານເສດຖະກິດມະຫາພາກ ເປັນຕົ້ນດ້ານງົບປະມານ: ສາມາດເກັບລາຍຮັບໄດ້ເກີນແຜນ, ຮັບປະກັນດ້ານລາຍຈ່າຍ; ດ້ານນະໂຍບາຍເງິນ ຕາ: ອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ສາມາດຄວບຄຸມໄດ້, ລະດັບຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ. ແຕ່ເຖິງຢ່າງໃດກໍຕາມ, ຄະນະຊ່ຽວຊານໄດ້ສະແດງຄວາມເປັນຫ່ວງ ແລະ ສະເໜີໃຫ້ເອົາໃຈໃສ່ຕໍ່ບາງບັນຫາ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ເສດຖະກິດມະຫາພາກໃນຕໍ່ໜ້າ ເປັນຕົ້ນ: ສືບຕໍ່ເກັບລາຍຮັບໃຫ້ຫຼາຍຂຶ້ນກວ່າເກົ່າ, ປະຕິບັດນະໂຍບາຍດ້ານພາສີ-ອາກອນຕາມກົດໝາຍໃຫ້ເຂັ້ມງວດ, ສົ່ງເສີມການພັດທະນາດ້ານສີມືແຮງງານ ແລະ ການຜະລິດພາຍໃນໃຫ້ຫຼາຍຂຶ້ນ, ປັບປຸງສະພາບແວດລ້ອມການລົງທຶນ, ສົ່ງເສີມໂຄງການແບບມີສ່ວນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP), ຄຸ້ມຄອງອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ, ສ້າງຄວາມເຂັ້ມແຂງຄັງສຳຮອງເງິນຕາຕ່າງປະເທດໃຫ້ຫຼາຍຂຶ້ນກວ່າເກົ່າ ລວມທັງການແກ້ໄຂບັນຫາໜີ້ສິນສາທາ

ອ່ານຕໍ່ໜ້າ 11

# ການແກ້ໄຂຜົນການກວດສອບ ປະຈຳປີ 2024



(ສພຊ) - ໃນບົດລາຍງານທີ່ສະເໜີໂດຍທ່ານວຽງທະວິສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 10 (ກອງປະຊຸມທ້າຍສະໄໝ) ຂອງສະພາແຫ່ງຊາດ ຊຸດທີ IX ເມື່ອວັນທີ 14 ພະຈິກຜ່ານມາ ໃຫ້ຮູ້ວ່າ: ໄລຍະ 5 ປີຜ່ານມາ ໄດ້ກວດສອບຂົງເຂດງົບປະມານແຫ່ງລັດ, ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອ, ທະນາຄານແຫ່ງ ສປປລາວ, ທະນາຄານທຸລະກິດລັດລົງທຶນ ແລະ ວິສາຫະກິດລັດລົງທຶນ ໄດ້ 6 ຮ້ອຍເປົ້າໝາຍ ເທົ່າກັບ 100% ຂອງຄາດໝາຍສູ້ຊົນທີ່ໄດ້ກຳນົດໄວ້; ພ້ອມນັ້ນກໍໄດ້ດຳເນີນການກວດສອບຕາມການມອບໝາຍ, ຕາມການແຈ້ງການ ແລະ ຕາມການສະເໜີ 11 ເປົ້າໝາຍ. ສະເພາະປີ 2025 ໄດ້ສຳເລັດການແກ້ໄຂຜົນການກວດສອບຢູ່ບັນດາກະຊວງ-ອົງການ, ແຂວງ-ນະຄອນຫຼວງວຽງຈັນ 39 ເປົ້າໝາຍ ໃນນັ້ນ, ຂັ້ນສູນກາງ 13 ເປົ້າໝາຍ ແລະ ທ້ອງຖິ່ນ 26 ເປົ້າໝາຍ; ໄດ້ກວດສອບຕາມແຜນການກວດສອບປະຈຳປີ 2025 ສຳເລັດ 154 ເປົ້າໝາຍ ເທົ່າກັບ 100% ຂອງແຜນການ ໂດຍສະເພາະການແກ້ໄຂຜົນການກວດສອບປະຈຳປີ 2024 ຕາມມະຕິເລກທີ 140/ສພຊ ເຊິ່ງມີ 4 ຂົງເຂດດັ່ງນີ້:

**1. ຂົງເຂດງົບປະມານແຫ່ງລັດ:** ຫົວໜ່ວຍງົບປະມານແຕ່ລະຂັ້ນ ໄດ້ແກ້ໄຂເງິນທີ່ກວດສອບເຫັນເພີ່ມ, ໜີ້ຕ້ອງຮັບສ່ວຍສາອາກອນ, ໜີ້ຕ້ອງຮັບຊັບສິນ, ໜີ້ຕ້ອງຮັບອື່ນໆ, ເງິນຮັກສາໄວ້ໃນບັນຊີລໍຖ້າ ແລະ ຄ່າເຊົ່າສຳປະທານ ຄືນເຂົ້າງົບປະມານແຫ່ງລັດດ້ວຍເງິນສົດ 5,303.17 ຕື້ກີບ ແລະ 310 ພັນໂດລາ; ຍັງບໍ່ເຂົ້າງົບປະມານແຫ່ງລັດ 5,761.53 ຕື້ກີບ ແລະ 11.56 ລ້ານໂດລາ, ຍັງບໍ່ໄດ້ຫັກລົບມູນຄ່າໂຄງການ 129.53 ຕື້ກີບ.

**2. ຂົງເຂດໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ**

- ບັນຫາໄດ້ຮັບການແກ້ໄຂ:

1) ໂຄງການກໍ່ສ້າງກັນຕາຝັ່ງເຈື່ອນຢູ່ເມືອງປາກຊັນ ແຂວງບໍລິຄຳໄຊ (ກະຊວງໂຍທາທິການ ແລະ ຂົນສົ່ງ - ກຍທຂ) ໄດ້ດຳເນີນການປະມູນ ມູນຄ່າ 67.16 ຕື້ກີບ ບໍ່ສອດຄ່ອງກັບກົດໝາຍ (ຜູ້ໄດ້ຮັບສັນຍາຮັບເໝົາກໍ່ສ້າງ ໄດ້ນຳໃຊ້ໃບດຳເນີນທຸລະກິດປອມ, ໃບຖານະການເງິນທີ່ບໍ່ແມ່ນຂອງບໍລິສັດ ແລະ ປອມແປງຜົນງານຂອງບໍລິສັດເຂົ້າໃນເອກະສານການປະມູນ); ຜົນການກວດຄືນພົບວ່າ ກຍທຂ ໄດ້ແກ້ໄຂດ້ວຍການຍົກເລີກສັນຍາແລ້ວແລະກະກຽມເຮັດການປະມູນຄືນໃໝ່.

2) 2 ໂຄງການຂອງ ກຍທຂ (ໂຄງການນ້ຳປະປາແລະສຸຂາພິບານ, ໂຄງການປັບປຸງ ແລະ ສ້ອມແປງທາງ 13 ໃຕ້) ບໍ່ໄດ້ບັນທຶກ (ອຸປະກອນນ້ຳປະປາ, ລົດຈັກ 7 ຄັນ ແລະ ລົດກະບະ 4 ຄັນ) ລວມມູນຄ່າ 411 ລ້ານກີບ ເຂົ້າບັນຊີຊັບສົມບັດຄົງທີ່ຂອງໂຄງການ; ຜົນການກວດຄືນ ໄດ້ຮັບການແກ້ໄຂດ້ວຍການບັນທຶກບັນດາລາຍການດັ່ງກ່າວ ເຂົ້າໃນບັນຊີຕິດຕາມຊັບສົມບັດຄົງທີ່ຂອງໂຄງການຢ່າງຄົບຖ້ວນ.

- ບັນຫາບໍ່ໄດ້ຮັບການແກ້ໄຂ:

1) ໂຄງການປັບປຸງແລະສ້ອມແປງທາງ 13 ເໜືອ ຂອງ ກຍທຂ ບໍ່ໄດ້ບັນທຶກລົດກະບະ 4 ຄັນ ແລະ ລົດຈັກ 5 ຄັນ ມູນຄ່າ 3.72 ຕື້ກີບ ເຂົ້າບັນຊີຊັບສິນຂອງໂຄງການຢ່າງຄົບຖ້ວນ; ຜົນການກວດຄືນ ຍັງບໍ່ທັນໄດ້ຮັບການແກ້ໄຂ.

2) ໂຄງການລ້ຽງສັດເພື່ອຜະລິດເປັນສິນຄ້າຢູ່ເຂດພາກເໜືອ (ກະຊວງກະສິກຳ ແລະ ສິ່ງແວດລ້ອມ - ກກສ) ມີພະນັກງານໄດ້ຮັບເງິນເດືອນ 2 ສິ້ນ (ໂດຍໄດ້ຮັບຈາກໂຄງການ ແລະ ຈາກງົບປະມານ) ເຊິ່ງໄດ້ຮັບເງິນເດືອນ ແລະ ເງິນນະໂຍບາຍຈາກໂຄງການ 1.31 ຕື້ກີບ; ຜົນການກວດຄືນ ຍັງບໍ່ໄດ້ເກັບເງິນຄືນ.

3) ບໍລິສັດຮັບເໝົາກໍ່ສ້າງ (ໂຄງການລ້ຽງສັດເພື່ອຜະລິດເປັນສິນຄ້າຢູ່ເຂດພາກເໜືອຂອງ ກກສ) ບໍ່ໄດ້ຊຳລະອາກອນມູນຄ່າເພີ່ມ 10% ຈຳນວນ 570 ລ້ານກີບ; ຜົນການກວດຄືນ ເຫັນວ່າຍັງບໍ່ໄດ້ມອບອາກອນດັ່ງກ່າວເຂົ້າງົບປະມານແຫ່ງລັດ.

**3. ຂົງເຂດທະນາຄານ**

1) ການເກັບກູ້ຄືນເງິນທີ່ທະນາຄານ ສົ່ງເສີມກະສິກຳຈຳກັດ ປ່ອຍກູ້ເກີນ 25% ຂອງທຶນຊັ້ນໜຶ່ງ (ຂອງທະນາຄານທີ່ປ່ອຍກູ້) ທີ່ທະນາຄານແຫ່ງ ສປປລາວ ໄດ້ອອກໜັງສືອະນຸຍາດໃຫ້ປ່ອຍສິນເຊື່ອເກີນທຶນຊັ້ນໜຶ່ງ ຈຳນວນ 209.52 ຕື້ກີບນັ້ນ; ຜົນການກວດຄືນ ຕົວເລກດັ່ງກ່າວໄດ້ເພີ່ມຂຶ້ນເປັນ 224.32 ຕື້ກີບ (ເພີ່ມຍ້ອນອັດຕາແລກປ່ຽນ) ເກັບກູ້ໄດ້ 109 ຕື້ກີບ, ຍັງເກີນທຶນຊັ້ນໜຶ່ງ 115.32 ຕື້ກີບ.

2) ທະນາຄານ 2 ແຫ່ງ ສືບຕໍ່ເກັບກູ້ຄືນເງິນທີ່ປ່ອຍກູ້ເກີນ 25% ຂອງທຶນຊັ້ນໜຶ່ງໃນປີ 2023 ຈຳນວນ 2,583.95 ຕື້ກີບ; ຜົນການກວດຄືນ ຕົວເລກດັ່ງກ່າວຫຼຸດລົງເປັນ 1,946.57 ຕື້ກີບ (ຍ້ອນມີການເພີ່ມທຶນຊັ້ນໜຶ່ງຂຶ້ນ) ເກັບກູ້ໄດ້ 259.67 ຕື້ກີບ, ຍັງເກີນທຶນຊັ້ນໜຶ່ງ 1,686.90 ຕື້ກີບ.

3) ທະນາຄານ 5 ແຫ່ງ ເກັບກູ້ຄືນເງິນທີ່ປ່ອຍກູ້ເກີນທຶນຊັ້ນໜຶ່ງ ຈຳນວນ 10,165.52 ຕື້ກີບ; ຜົນການກວດຄືນ ເພີ່ມຂຶ້ນ 12,329.47 ຕື້ກີບ (ຍ້ອນອັດຕາແລກປ່ຽນ) ເກັບກູ້ໄດ້ 752.58 ຕື້ກີບ, ຍັງເກີນທຶນຊັ້ນໜຶ່ງ 11,576.89 ຕື້ກີບ.

**4. ຂົງເຂດວິສາຫະກິດລັດລົງທຶນ:**

- ບັນຫາໄດ້ຮັບການແກ້ໄຂ:

1) 3 ລັດວິສາຫະກິດ ໄດ້ສັງລວມໜີ້ຕ້ອງຮັບຄ່າໂຄງການກໍ່ສ້າງຂົວ-ທາງຈາກພາກລັດ, ການຂາຍຊັບສົມບັດ ເຂົ້າໃນເອກະສານລາຍງານການເງິນ 55.66 ຕື້ກີບ;

2) 6 ລັດວິສາຫະກິດ ໄດ້ມອບອາກອນປະເພດຕ່າງໆ ເຂົ້າງົບປະມານແຫ່ງລັດ 2.49 ຕື້ກີບ;

3) 1 ລັດວິສາຫະກິດ ເກັບໜີ້ຕ້ອງຮັບໄດ້ຈາກການຂາຍຜະລິດສິ່ງພິມ 1.87 ຕື້ກີບ.

- ບັນຫາບໍ່ໄດ້ຮັບການແກ້ໄຂ (ບໍ່ທັນໄດ້ມອບພັນທະເຂົ້າງົບປະມານແຫ່ງລັດ):

1) 3 ລັດວິສາຫະກິດ ມີໜີ້ຕ້ອງຮັບຄ່າໂຄງການກໍ່ສ້າງຂົວ-ທາງຈາກພາກລັດ, ຄ່າບໍລິການແລະຄ່າຕິດຕາມໂຄງການ ບໍ່ໄດ້ບັນທຶກເຂົ້າໃນເອກະສານລາຍງານການເງິນ 192.69 ຕື້ກີບ;

2) 2 ລັດວິສາຫະກິດ ມີໜີ້ຕ້ອງຮັບຈາກການຂາຍຜະລິດສິ່ງພິມ, ຄ່າເຊົ່າຍົນເໝົາລຳທີ່ເກັບຄືນບໍ່ໄດ້ແກ່ຍາວມາຫຼາຍປີ ຍັງຄ້າງ 21.67 ຕື້ກີບ;

3) 1 ລັດວິສາຫະກິດ ມີໜີ້ຕ້ອງສົ່ງ (ຄ່າຜ່ານເດີ່ນ) ທີ່ຄ້າງຊຳລະໃຫ້ກອງຄຸ້ມຄອງສະໜາມບິນ 12.94 ຕື້ກີບ; ຜົນການກວດຄືນ ຍັງເກັບບໍ່ໄດ້.

4) 3 ລັດວິສາຫະກິດ ຍັງຄ້າງມອບອາກອນປະເພດຕ່າງໆ 3.30 ຕື້ກີບ.

# ບາງຄຳຄິດເຫັນຕໍ່ວຽກງານຈຸດສຸມ ຂອງ ສປສສ ແລະ ອອປສ



(ສພຊ) - ວັນທີ 17 ພະຈິກຜ່ານມາ, ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ຫຼັງຈາກ, ທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ (ສປສສ) ແລະ ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ອອປສ) ໄດ້ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານ 5 ປີ (2026-2030), ປະຈຳປີ 2026 ຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຕາມລຳດັບ; ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ມີຄຳເຫັນຕໍ່ສອງບົດລາຍງານດັ່ງກ່າວ ໂດຍສະເພາະທິດທາງແຜນການວຽກງານຈຸດສຸມປີ 2026 ເຊິ່ງສະເໜີບາງຄຳຄິດເຫັນດັ່ງນີ້:

**ສຳລັບສານປະຊາຊົນສູງສຸດ:**

- ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ແກ່ຜູ້ພິພາກສາ, ພະນັກງານ-ລັດຖະກອນ ຂອງສານປະຊາຊົນ ຕິດພັນກັບການບຳລຸງ, ຍົກລະດັບດ້ານວິຊາສະເພາະ, ຄວາມຮູ້ຄວາມສາມາດ, ທັກສະໃນການຄົ້ນຄວ້າຄະດີ ທັງເອົາໃຈໃສ່ຕິດຕາມກວດກາປະເມີນເພື່ອເລືອກເຟັ້ນໃຫ້ໄດ້ຜູ້ພິພາກສາດີ-ເກັ່ງ ຕອບສະໜອງກັບໜ້າທີ່ການເມືອງໃນໄລຍະໃໝ່;

-ສຸມໃສ່ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂອງສານປະຊາຊົນແຕ່ລະຂັ້ນ ໃຫ້ເປັນລະບົບ, ເໝາະສົມ ແລະ ສອດຄ່ອງກັບການປັບປຸງອົງການປົກຄອງທ້ອງຖິ່ນ ເພື່ອສ້າງເງື່ອນໄຂແລະອຳນວຍຄວາມສະດວກການເຂົ້າເຖິງຂະບວນຍຸຕິທຳຂອງປະຊາຊົນ ໃຫ້ຫຼາຍຂຶ້ນ;

- ສືບຕໍ່ຍົກສູງຄຸນນະພາບການດຳເນີນຄະດີຂອງສານປະຊາຊົນ ໃຫ້ຮັບປະກັນຄວາມຖືກຕ້ອງຕາມຫຼັກການຂອງການດຳເນີນຄະດີ ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ຖືກຕ້ອງ ແລະ ເປັນທຳ, ຮັບປະກັນການດຳເນີນຄະດີໃຫ້ມີຄຸນນະພາບ ທັງສຸມໃສ່ຄົ້ນຄວ້າປັບປຸງກົນໄກ, ຮູບການ ແລະ ວິທີການ ໃນການກວດກາຄຳຕັດສິນ, ຄຳພິພາກສາຂອງສານ ທີ່ມີການລະເມີດກົດໝາຍ, ຄຳຕັດສິນ ຫຼື ຄຳພິພາກສາ ທີ່ມີເນື້ອໃນບໍ່ຈະແຈ້ງ ຫຼື ມີເນື້ອໃນຂັດກັນ ເຊິ່ງເປັນສາເຫດໃຫ້ການປະຕິບັດຄຳຕັດສິນຂອງສານມີຄວາມຫຍຸ້ງຍາກ ຫຼື ບໍ່ສາມາດຈັດຕັ້ງປະຕິບັດໄດ້ນັ້ນ ໃຫ້ມີຜົນສຳເລັດຢ່າງເປັນຮູບປະທຳ;

-ຄົ້ນຄວ້າປັບປຸງນິຕິກຳໃຕ້ກົດໝາຍທີ່ຈຳເປັນ ໂດຍສະເພາະກົນໄກການດຳເນີນຄະດີແພ່ງ ໃຫ້ມີຄວາມໂລ່ງລ່ຽນພ້ອມທັງໂຄສະນາເຜີຍແຜ່ໃຫ້ກວ້າງຂວາງ ແລະ ທົ່ວເຖິງ ໃຫ້ແກ່ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ກໍຄືຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໄດ້ຮັບຮູ້ ແລະ ເຂົ້າໃຈ ສິດ, ພັນທະ ແລະ ຂັ້ນຕອນຂອງການດຳເນີນຄະດີຢ່າງຈະແຈ້ງ ໂດຍໃຫ້ຖືສຳຄັນການປະຕິບັດຫຼັກການໂຕ້ແຍ່ງ, ໂຕ້ຖຽງ ເລີ່ມແຕ່ຫົວທີໃນຂະບວນການດຳເນີນຄະດີຂອງສານແຕ່ລະຂັ້ນ ໃຫ້ເຂັ້ມງວດແລະ ມີປະສິດທິພາບຢ່າງເປັນຮູບປະທຳ;

- ສືບຕໍ່ສ້າງ ແລະ ປັບປຸງນິຕິກຳຮ່ວມກັບພາກສ່ວນກ່ຽວຂ້ອງຕ່າງໆເພື່ອປັບປຸງກົນໄກການປະສານສົມທົບລະຫວ່າງສະພາແຫ່ງຊາດ ກັບ ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ, ກະຊວງຍຸຕິທຳ, ອົງການກວດກາແຫ່ງລັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄວາມຄ່ອງຕົວກວ່າເກົ່າ ແນໃສ່ຍົກສູງຄຸນນະພາບຂອງການດຳເນີນຄະດີແລະໃຫ້ສອດຄ່ອງຕາມພາລະບົດບາດ, ສິດແລະໜ້າທີ່ຂອງແຕ່ລະພາກສ່ວນຕາມກຳນົດໄວ້ໃນກົດໝາຍ.

**ສຳລັບອົງການໄອຍະການປະຊາຊົນສູງສຸດ**

- ສືບຕໍ່ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງຂອງອົງການໄອຍະການປະຊາຊົນແຕ່ລະຂັ້ນທີ່ຍັງບໍ່ທັນສຳເລັດຕາມແຜນການ ໃຫ້ສອດຄ່ອງກັບການປັບປຸງກົງຈັກຂອງອົງການປົກຄອງທ້ອງຖິ່ນ; ເອົາໃຈໃສ່ບຳລຸງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຈັນຍາບັນ, ຈັນຍາທຳ, ຄວາມຮູ້ຄວາມສາມາດ ໃຫ້ມີຄຸນນະພາບສູງຂຶ້ນ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ວຽກງານມີຄວາມເຂັ້ມງວດເດັດຂາດ ພ້ອມທັງປະເມີນການປະຕິບັດໜ້າທີ່ຕາມຄຳຂວັນ 3 ມີ 4 ຮັບປະກັນ ໃຫ້ມີຄຸນນະພາບ ແລະ ທົບທວນຄືນການກຳນົດຕົວຊີ້ບອກຂອງຄຳຂວັນ ໃຫ້ສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່;

- ເພີ່ມທະວີການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ ໃຫ້ເປັນລະບົບຕໍ່ເນື່ອງເພື່ອຮັບປະກັນການປະຕິບັດພາລະບົດບາດການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍຂອງອົງການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບຄວາມເປັນຈິງ ແລະ ຮັບປະກັນໃຫ້ມີຄວາມຍຸຕິທຳ;

-ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ຮັບປະກັນໃນການຈັບຕົວ, ກັກຕົວ, ການກັກຂັງ, ການປ່ອຍຕົວ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສຸມໃສ່ແກ້ໄຂບັນຫາການກັກຂັງຜູ້ຖືກຫາແລະນັກໂທດເກີນກຳນົດເວລາຕາມຄຳຕັດສິນ, ຄຳພິພາກສາຂອງສານ ແລະ ຕາມກົດໝາຍກຳນົດ;

-ເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ອົງການປະຕິບັດຄຳຕັດສິນຂອງສານ ໃນ

ອ່ານຕໍ່ໜ້າ 11

# ເພີ່ມທະວີການຮ່ວມມືວຽກງານກົດໝາຍຈີນ-ອາຊຽນ



(ສພຊ) - ວັນທີ 19-22 ພະຈິກຜ່ານມາ, ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ຄຳແພງ ວິລະພັນ ປະທານກຳມາທິການກົດໝາຍ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມເວທີປຶກສາຫາລືການຮ່ວມມືວຽກງານກົດໝາຍຈີນ-ອາຊຽນ ຄັ້ງທີ 7 ທີ່ນະຄອນສິງຊີ່ງ, ສປຈີນ ພາຍໃຕ້ຄຳຂວັນ "ເພີ່ມທະວີການຮ່ວມມືວຽກງານກົດໝາຍຈີນ-ອາຊຽນ, ຮ່ວມກັນສ້າງປະຊາຄົມຄູ່ຮ່ວມຊາຕາກຳລະຫວ່າງປະເທດບ້ານໃກ້ເຮືອນຄຽງ".

ກອງປະຊຸມຄັ້ງນີ້ ເປັນການແລກປ່ຽນບົດຮຽນການຮ່ວມມືກັນທາງດ້ານກົດໝາຍໃນຂົງເຂດຕ່າງໆ ລະຫວ່າງ ຈີນ-ອາຊຽນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ເພື່ອຮ່ວມກັນຈັດຕັ້ງປະຕິບັດກົດໝາຍໃຫ້ມີປະສິດທິຜົນ ແນໃສ່ຮັບປະກັນຄວາມຖືກຕ້ອງ, ເປັນທຳ ແລະ ເສີມຂະຫຍາຍບົດບາດການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ຂອງບັນດາປະເທດອາຊຽນ ແລະ ສປຈີນ ຢ່າງເປັນຮູບປະທຳ ທັງເປັນກຸນແຈສຳຄັນໃນການພັດທະນາການຮ່ວມມືທາງດ້ານເສດຖະກິດຂອງອາຊຽນ ແລະ ຈີນ; ກອງປະຊຸມຍັງໄດ້ເນັ້ນໜັກເຖິງຄວາມສຳຄັນແລະຄວາມຈຳເປັນ ໃນການສົ່ງເສີມການຈັດລະບຽບກົດໝາຍ, ກົດລະບຽບ ແລະ ມາດຕະຖານໃນຂົງເຂດການຂົນສົ່ງ, ເສດຖະກິດດິຈິຕອນ ແລະ ເສດຖະກິດສີຂຽວ ພ້ອມທັງເພີ່ມປະສິດທິພາບການຮ່ວມມືດ້ານການບັງຄັບໃຊ້ກົດໝາຍໃນການຕໍ່ສູ້ກັບອາຊະຍາກຳຂ້າມຊາຍແດນແລະການແກ້ໄຂຂໍ້ຂັດແຍ້ງຂ້າມຊາຍແດນ.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ເປັນການສະແດງໃຫ້ເຫັນເຖິງຄວາມຕັ້ງໜ້າໃນການເສີມສ້າງການພົວພັນຮ່ວມມືຍຸດທະສາດຮອບດ້ານ ລະຫວ່າງ ລາວ-ຈີນ ແລະ ອາຊຽນ ໂດຍສະເພາະການພົວພັນຮ່ວມມືໃນຂົງເຂດກົດໝາຍ ແລະ ນິຕິທຳ ໃຫ້ໄດ້ຮັບການຂະຫຍາຍຕົວຢ່າງເລິກເຊິ່ງໃນທຸກຂົງເຂດເພື່ອຮັບປະກັນທາງດ້ານສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາແບບຮ່ວມກັນໃນພາກພື້ນ ໂດຍສະເພາະແມ່ນການຍົກລະດັບການຮ່ວມມືດ້ານນິຕິທຳ ທີ່ເປັນພື້ນຖານສຳຄັນໃນການສ້າງປະຊາຄົມທີ່ມີອະນາຄົດຮ່ວມກັນລະຫວ່າງ ລາວ-ຈີນ ແລະ ຈີນ-ອາຊຽນ ໃຫ້ມີຄວາມໝັ້ນຄົງ. ນອກຈາກນີ້, ທ່ານປະທານກຳມາທິການກົດໝາຍ ຍັງໄດ້ຕາງໜ້າຄະນະຜູ້ແທນສະພາແຫ່ງຊາດລາວ ຂຶ້ນມີຄຳເຫັນໃນພິທີເປີດກອງປະຊຸມ ພ້ອມກັບຮັບຊົມວິດີໂອຊົມເຊີຍຕໍ່ກອງປະຊຸມຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ແລະ ເຂົ້າຮ່ວມການພົບປະສອງຝ່າຍກັບປະທານສະມາຄົມກົດໝາຍຈີນ ພ້ອມຄະນະ; ຮ່ວມກັບຄະນະຜູ້ແທນຂອງສປປລາວ ນຳໂດຍທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ຄະນະເລຂາທິການສູນກາງພັກ, ປະທານສານປະຊາຊົນສູງສຸດ ໄປຢ້ຽມຢາມບໍລິສັດ ຊາງອ່ານ ໂອໂຕບິວກຣຸບ ຈຳກັດ ແລະ ພື້ນຖານເສດຖະກິດຊຶ່ງຈຳນວນໜຶ່ງຂອງນະຄອນສິງຊີ່ງ.

# ມອບ-ຮັບເງິນຊຸກຍູ້ ກອງປະຊຸມສະໄໝສາມັນເທື່ອທີ 10



(ສພຊ) - ວັນທີ 21 ພະຈິກຜ່ານມາ, ສະພາແຫ່ງຊາດ (ສພຊ) ໄດ້ຈັດພິທີມອບ-ຮັບເງິນ 200 ລ້ານກີບ ເພື່ອສະໜັບສະໜູນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ຈາກບໍລິສັດ ຮຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດ-ລາວ, ຕາງໜ້າຮັບໂດຍທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ແລະ ຕາງໜ້າມອບໂດຍທ່ານ ຫງວຽນ ແທັງ ດາດ ອຳນວຍການບໍລິສັດດັ່ງກ່າວເຊິ່ງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ; ໂອກາດນີ້, ທ່ານ ປອ. ອາຄົມ ປຣະເສີດ ໄດ້ມອບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ໃຫ້ບໍລິສັດ ຮຸ້ນສ່ວນລົງທຶນ ແລະ ພັດທະນາພະລັງງານ ຫວຽດ-ລາວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນມອບເງິນອຸປະຖຳ.

**(ນາງ ກຸກກິກ ບຸດດາໄຊ)**




# ຖອດສິ່ງທີ່ເປັນປະໂຫຍດ ຈາກລັດທິທຶນນິຍົມ

# ທິດດີ

ຜູ້ຂຽນໄດ້ນຳສະເໜີບົດຂຽນກ່ຽວກັບ "ທຶນ" ສອງບົດແລ້ວ ໂດຍໄດ້ວິເຄາະ-ເຈາະເລິກເສດຖະສາດ-ການເມືອງ ຂອງທ່ານ ກາກ ມາກ ທີ່ໄດ້ຂຽນໄວ້ໃນປຶ້ມ: "DAS KAPITAL" ຂອງເພິ່ນ ເຊິ່ງມາເຖິງປັດຈຸບັນນີ້ ກໍຍັງຖືກຢັ້ງຢືນວ່າ: ມີຄຸນຄ່າສຳລັບການພັດທະນາເສດຖະກິດຕໍ່ບັນດາປະເທດຕ່າງໆໃນໂລກ ແລະແລ້ວຜູ້ຂຽນກໍໂຊກດີທີ່ໄດ້ມີໂອກາດສຶກສາ ທັງເປັນບັນນາທິການພາກພາສາລາວຂອງປຶ້ມທີ່ມີຊື່ວ່າ: "ລັດທິທຶນນິຍົມສະໄໝໃໝ່, ບົດບາດ, ຜົນກະທົບຕໍ່ວິວັດທະນາການຂະຫຍາຍຕົວຂອງໂລກ ແລະ ການກຳນົດນະໂຍບາຍຂອງຫວຽດນາມ..." ໂດຍແມ່ນສຳນັກພິມ ຊືເຖິດ ຂອງ ສສ.ຫວຽດນາມ ເປັນຜູ້ຮັບຜິດຊອບພິມຈຳໜ່າຍທັງພາສາຫວຽດນາມ ແລະ ພາສາລາວ.

ສຳລັບພາສາລາວ ຄາດວ່າປີ 2026 ຈະມີວາງຈຳໜ່າຍໃນລາວ ໂດຍແມ່ນສຳນັກງານພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ, ກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນຄູ່ຮ່ວມມືຝ່າຍລາວເຮົາຮັບຜິດຊອບ... ສະບັບພາສາລາວ ແມ່ນມີທັງໝົດ 510 ໜ້າ ລວມມີ 4 ພາກໃຫຍ່ຄື:

ພາກທີ I: ພື້ນຖານທິດສະດີກ່ຽວກັບລັດທິທຶນນິຍົມສະໄໝໃໝ່ ແລະ ບົດບາດຂອງລັດທິທຶນນິຍົມຕໍ່ກັບວິວັດການຂະຫຍາຍຕົວຂອງໂລກ. ພາກນີ້ ຜູ້ຂຽນຖືວ່າສຳຄັນ ເຊິ່ງລວມມີຢູ່ 4 ຂໍ້ປີກຍ່ອຍຄື: 1. ວິທີຄົ້ນຄວ້າມາກຊິດ; 2. ທັດສະນະຂອງປະທານ ໂຮ່ຈີມິງ ແລະ ພັກຄອມມູນິດຫວຽດນາມ ກ່ຽວກັບລັດທິທຶນນິຍົມ; 3. ບັນດາວິທີຄົ້ນຄວ້າອື່ນໆ...; 4. ທິດສະດີຈຳນວນໜຶ່ງກ່ຽວກັບລັດທິທຶນນິຍົມສະໄໝໃໝ່ແຕ່ປີ2000ມາເຖິງປັດຈຸບັນ.

ພາກທີ II: ສະພາບການຂະຫຍາຍຕົວຂອງລັດທິທຶນນິຍົມສະໄໝໃໝ່ ແຕ່ປີ 1945 ໂດຍສະເພາະແຕ່ປີ 2000 ເຖິງປັດຈຸບັນ... ມີຂໍ້ຍ່ອຍເຖິງ 4 ຂໍ້.

ພາກທີ III: ບົດບາດຂອງລັດທິທຶນນິຍົມສະໄໝໃໝ່ຕໍ່ກັບວິວັດການພັດທະນາຂອງໂລກແຕ່ປີ 1945 ໂດຍສະເພາະແຕ່ປີ 2000 ເຖິງປະຈຸບັນ... ມີ 6 ຂໍ້ຍ່ອຍ.

ພາກທີ IV: ການສະເໜີທັດສະນະ, ທິດທາງກຳນົດນະໂຍບາຍໃຫ້ແກ່ຫວຽດນາມ... ມີຂໍ້ຍ່ອຍຄື: 1. ທ່າອ່ຽງການພັດທະນາ, ບົດບາດ ແລະ ຜົນກະທົບຂອງລັດທິທຶນນິຍົມຕໍ່ກັບວິວັດການຂະຫາຍຕົວຂອງໂລກຮອດປີ 2030 ວິໄສທັດ 2045; 2. ການສະເໜີວິທີສຶກສາຄົ້ນຄວ້າເພື່ອຮັບຮູ້ກ່ຽວກັບລັດທິທຶນນິຍົມສະໄໝໃໝ່ຕໍ່ກັບວິວັດການຂະຫຍາຍຕົວຂອງໂລກ ແລະ ຫວຽດນາມ; 3. ການນຳສະເໜີທັດສະນະຂອງຫວຽດນາມໃນການພັດທະນາ ແລະ ການເຊື່ອມໂຍງສາກົນໃນໄລຍະໃໝ່; 4. ການນຳສະເໜີທິດທາງໃຫຍ່ເພື່ອໝູນໃຊ້ຢ່າງມີປະສິດທິຜົນ, ຫຼຸດຜ່ອນຜົນກະທົບທາງລົບໃນການເຊື່ອມໂຍງສາກົນ ແຕ່ນີ້ຮອດປີ 2030 ວິໄສທັດ 2045. ພາກນີ້ ຜູ້ຂຽນຖືວ່າເປັນໝາກຫົວໃຈຂອງປຶ້ມເຫຼັ້ມນີ້ ຄຽງຄູ່ກັບການສະຫຼຸບລວມ ເຊິ່ງມີບາງຈຸດທີ່ຜູ້ຂຽນໃຫ້ຄວາມສຳຄັນດັ່ງນີ້:... "ສັງລວມໃນປີ 2030 ແລະ 2045; ທຶນນິຍົມຈະສືບຕໍ່ມີບົດບາດສຳຄັນໃນຂະບວນວິວັດການພັດທະນາໂລກໃນຫຼາຍຂົງເຂດ; ພິເສດແມ່ນວິທະຍາສາດ-ເຕັກໂນໂລຊີ; ເສດຖະກິດ ແລະ ການສຶກສາ-ກໍ່ສ້າງຊັບພະຍາກອນມະນຸດ... ໂລກ, ພາກພື້ນທີ່ຫວຽດນາມເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ ແລະ ກວ້າງຂວາງ; ສືບຕໍ່ໄດ້ຮັບການແບ່ງປັນໂດຍປະເທດທຶນນິຍົມພັດທະນາ. ສະນັ້ນ, ການພັດທະນາລັດທິທຶນນິຍົມໃນໄລຍະຈະມາເຖິງ ຈະນຳມາໃຫ້ຫວຽດນາມທັງກາລະໂອກາດ ແລະ ສິ່ງທ້າທາຍ".

ເພື່ອຍາດແຍ່ງເອົາກາລະໂອກາດດັ່ງກ່າວ, ຫວຽດນາມຕ້ອງມີທັດສະນະໃໝ່ເພື່ອຮັບຮູ້ສະພາບຄວາມເປັນຈິງຂອງລັດທິທຶນນິຍົມ; ບົດບາດຜົນກະທົບຂອງມັນຕໍ່ການພັດທະນາໂລກ; ມີບັນດາທິດທາງນະໂຍບາຍໃໝ່ ໃນນັ້ນ, ມີທັດສະນະສຳຄັນທີ່ສຸດຄື: ເບິ່ງກົງໄປກົງມາຈຸດແຂງ, ຈຸດອ່ອນຂອງຫວຽດນາມໃນການຮ່ວມມື ແລະ ແກ່ງແຍ້ງແຂ່ງຂັນກັບບັນດາປະເທດທຶນນິຍົມ ບົນພື້ນຖານສະເໜີບັນດາທິດທາງນະໂຍບາຍເພີ່ມທະວີກຳລັງແຮງຮອບດ້ານແຫ່ງຊາດ ແລະ ຍົກສູງການແກ່ງແຍ້ງແຂ່ງຂັນ... ສະເໜີເປັນຂໍ້ຄິດ.



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ສູນກາງພັກ, ປະທານສະພາແຫ່ງຊາດ;ເຂົ້າຮ່ວມມີທ່ານທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ, ປະທານປະເທດ; ບັນດາທ່ານການນຳຂັ້ນສູງ ແລະ ອະດີດການນຳຂັ້ນສູງຂອງພັກ-ລັດ, ທ່ານ ສອນໄຊ ສີພັນດອນ ກຳມະການກົມການເມືອງສູນກາງພັກ, ນາຍົກລັດຖະມົນຕີ, ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງ ແລະ ແຂກຖືກເຊີນ.

ໃນວາລະສຸດທ້າຍຂອງການປະຊຸມ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດໄດ້ຂຶ້ນຜ່ານມະຕິສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025), ປະຈຳປີ 2025; ແຜນງົບປະມານແຫ່ງລັດ 5 ປີ (2021-2025), ປະ ຈຳປີ 2025, ແຜນເງິນຕາປະຈຳປີ2025ແລະທິດທາງແຜນການປະຈຳປີ 2026, ບົດລາຍງານການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍ ວິຊາການ ຂອງຂະແໜງການຂັ້ນສູນກາງແລະທ້ອງຖິ່ນປີ2025 ແລະ ເງິນເກີນແຜນປີ 2024; ຈາກນັ້ນ, ບັນດາທ່ານ ສສຊ ໄດ້ສຸມໃສ່ປະກອບຄຳຄິດຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາດ້ວຍຄະແນນສຽງເຫັນດີເປັນເອກະພາບ.

ຕອນທ້າຍກອງປະຊຸມ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ກ່າວສູນທອນພິດປິດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສພຊ ຊຸດທີ IX ຢ່າງເປັນທາງການ.

**(ນາງ ສຸພາວັນ ທອມສະນິດ)**



## ວາງສະແດງ...

(ຕໍ່ຈາກໜ້າ 1)

(ສພຊ) - ພິທີເປີດງານສະແດງຜົນງານການເຄື່ອນໄຫວຂອງສະພາແຫ່ງຊາດ ຄົບຮອບ 50 ປີ (2 ທັນວາ 1975-2 ທັນວາ 2025) ໄດ້ຈັດຂຶ້ນໃນຕອນບ່າຍວັນທີ 19 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ເຊິ່ງມີບັນດາທ່ານຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໄດ້ມີຄຳເຫັນກ່າວເປີດໃນພິທີວ່າ: ງານສະແດງຜົນງານການເຄື່ອນໄຫວຂອງສະພາແຫ່ງຊາດ ຄົບຮອບ 50 ປີ ຄັ້ງນີ້ ມີຄວາມໝາຍຄວາມສຳຄັນຫຼາຍ ເພາະໃນໄລຍະນີ້ສະພາແຫ່ງຊາດ ກຳລັງທວນຄືນມູນເຊື້ອ50ປີຂອງສະພາແຫ່ງຊາດ ໃນນີ້, ໄດ້ຄົ້ນຄວ້າ ແລະ ຮຽບຮຽງປະຫວັດສາດສະພາແຫ່ງຊາດ 50 ປີ ແລະ ປຶ້ມ 50 ປີ ສາຍພົວພັນມິດຕະພາບລະຫວ່າງສະພາແຫ່ງຊາດແຫ່ງສປປລາວ ກັບ ສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ, 50 ຄຳຖາມ-ຄຳຕອບກ່ຽວກັບສະພາແຫ່ງຊາດ; ນອກຈາກນີ້, ຍັງໄດ້ຄົ້ນຄວ້າ-ສັງລວມປະມວນເອກະສານທີ່ສຳຄັນຕ່າງໆຂອງສະພາແຫ່ງຊາດ ຈຳນວນ 10 ປະມວນ ແລະ ຄົ້ນຄວ້າຮູບພາບການເຄື່ອນໄຫວຂອງສະພາແຫ່ງຊາດ. ທັງໝົດນີ້ ແມ່ນກິດຈະກຳເພື່ອສ້າງຜົນງານຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ແລະ ການສະເຫຼີມສະຫຼອງວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 50 ປີ, ວັນສະຖາປະນາສປປລາວຄົບຮອບ 50 ປີ (2 ທັນວາ 1975-2 ທັນວາ 2025) ແລະ ວັນເກີດປະທານ ໄກສອນ ພົມວິຫານ ຜູ້ນຳທີ່ແສນເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ຄົບຮອບ 105 ປີ (13 ທັນວາ 1920-13 ທັນວາ2025); ພິເສດກໍແມ່ນການກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນຕົ້ນປີ 2026 ໃຫ້ເປັນຂະບວນຟົດຟື້ນ.

ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກ່າວຕື່ມວ່າ: ເພື່ອເສີມຂະຫຍາຍມູນເຊື້ອ 50 ປີ ແຫ່ງການເຕີບໃຫຍ່ຂະຫຍາຍຕົວຂອງສະພາແຫ່ງຊາດ, ພວກເຮົາເຫັນມີຄວາມຈຳເປັນຕ້ອງມີເອກະສານສຳຄັນຈຳນວນໜຶ່ງເປັນຕົ້ນ: ປະຫວັດສາດສະພາແຫ່ງຊາດ 50 ປີ ແລະ ປຶ້ມ 50 ປີ ສາຍພົວພັນມິດຕະພາບລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ກັບ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, 50 ຄຳຖາມ-ຄຳຕອບ ກ່ຽວກັບສະພາແຫ່ງຊາດ, ປະມວນເອກະສານທີ່ສຳຄັນຕ່າງໆຂອງສະພາແຫ່ງຊາດ ແລະ ໄດ້ສັງລວມຮູບພາບການເຄື່ອນໄຫວຂອງສະພາແຫ່ງຊາດ ເພື່ອເປັນເອກະສານໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມໃຫ້ພະນັກງານຮຸ່ນຫຼັງ ແລະ ປະຊາຊົນລາວບັນດາເຜົ່າ ຮັບຮູ້ຢ່າງເລິກເຊິ່ງຕໍ່ກັບສະພາແຫ່ງຊາດ; ນອກນັ້ນ, ຍັງຈະເປັນຂໍ້ມູນທີ່ສຳຄັນໃຫ້ແກ່ການຈັດຕັ້ງໃນລະບົບການເມືອງປະຊາທິປະໄຕປະຊາຊົນທຸກຂັ້ນ ແລະ ສະຖາບັນຕ່າງໆ ນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ ແລະ ເຜີຍແຜ່ຮ່ຳຮຽນໃນຂົງເຂດນິຕິບັນຍັດ ໃຫ້ນັບມື້ກວ້າງຂວາງ.

ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ຮັບຟັງການບັນລະຍາຍໂດຍຫຍໍ້, ຢ້ຽມຊົມການວາງສະແດງຮູບພາບ ແລະ ຜະລິດຜົນຕ່າງໆ.

**(ກົງທະນູຄຳ ພິພັດເສລີ)**

## ເຜີຍແຜ່...

(ຕໍ່ຈາກໜ້າ 1)

ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະຮັບຜິດຊອບຄົ້ນຄວ້າ ແລະ ຮຽບຮຽງປະຫວັດຂອງສະພາແຫ່ງຊາດ. ມະຕິດັ່ງກ່າວ ເນັ້ນໃຫ້ເຫັນເຖິງຄວາມສຳຄັນ ແລະ ຄວາມຈຳເປັນໃນການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນ; 5 ຈຸດປະສົງລະດັບຄາດໝາຍ; 5 ທັດສະນະຊີ້ນຳ; ວຽກງານຈຸດສຸມຈຳນວນໜຶ່ງໃນການກະກຽມ ເປັນຕົ້ນ: ວຽກງານແຕ່ງຕັ້ງຄະນະກຳມະການເລືອກຕັ້ງ, ວຽກງານກະກຽມບຸກຄະລາກອນອອກສະໝັກຮັບເລືອກຕັ້ງ (ໂຄງປະກອບເພດ, ເຜົ່າ, ຂົງເຂດວຽກງານ, ອາຍຸກະສຽນ), ວຽກງານໂຄສະນາ, ເຜີຍແຜ່ເພື່ອເຊື່ອມຊຶມກົດໝາຍ ແລະ ເອກະສານກ່ຽວກັບການເລືອກຕັ້ງ, ການສ້າງຂະບວນການ ແລະ ການຍ້ອງຍໍ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານງົບປະມານ; ແລະ ການຈັດຕັ້ງປະຕິບັດ.

ຈາກນັ້ນ, ທ່ານ ສຸບັນ ສະວະບຸດປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຕາງໜ້າຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ) ໄດ້ລາຍງານການກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີV ໂດຍໄດ້ແຈ້ງໃຫ້ຊາບວຽກງານທີ່ຈັດຕັ້ງປະຕິບັດຜ່ານມາ ເຊິ່ງຄະນະປະຈຳສະພາແຫ່ງຊາດໄດ້ມີໜັງສືສະເໜີເຖິງປະທານປະເທດ ເພື່ອປະກາດການແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດແລະປະທານປະເທດໄດ້ອອກລັດຖະດຳລັດປະກາດຢ່າງເປັນທາງການ ໃນວັນທີ24 ຕຸລາ 2025; ດຳເນີນກອງປະຊຸມຄັ້ງປະຖົມມະລຶກຂອງຄລຊ ເພື່ອພ້ອມກັນເຊື່ອມຊຶມມະຕິກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ປຶກສາຫາລື ແລະ ປັບປຸງ 4 ຮ່າງເອກະສານ ເຊິ່ງລົງລາຍເຊັນນຳໃຊ້ຢ່າງເປັນທາງການແລ້ວ; ຖະແຫຼງຂ່າວຕໍ່ສື່ມວນຊົນພາຍໃນຮັບຊາບບັນດາໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດ ເພື່ອນຳໄປໂຄສະນາໃຫ້ສັງຄົມໄດ້ຮັບຊາບແຕ່ຫົວທີ ແລະ ພ້ອມກັນປະກອບສ່ວນຕາມສິດ, ໜ້າທີ່ ແລະ ພັນທະຂອງຕົນ.

**(ກົງທະນູຄຳ ພິພັດເສລີ)**

# ສພຂ ຫຼວງນໍ້າທາ ເຄື່ອນໄຫວວຽກງານຫຼາຍດ້ານ ແລະ ກະກຽມວຽກງານ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ IV



(ສພຂ) - ເພື່ອຕີລາຄາຄືນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໃນຕອນເຊົ້າຂອງວັນທີ 18 ພະຈິກ 2025 ສະພາປະຊາຊົນແຂວງຫຼວງນໍ້າທາ (ສພຂ) ໄດ້ເປີດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດວຽກງານ ພະນັກງານ-ລັດຖະກອນ ປະຈຳປີ 2025 ຂຶ້ນທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານຂອງທ່ານ ມີໄຊ ມີວິໄລ ກຳມະການຄະນະປະຈຳ ສພຂ ປະທານຄະນະກຳມະການວັດທະນາທຳສັງຄົມ ແລະ ບັນດາເຜົ່າ ມີສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ, ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການເຜີຍແຜ່, ເຊື່ອມຊຶມບາງມາດຕາຂອງດຳລັດ 300/ລບ ວ່າດ້ວຍການປະເມີນຜົນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ຄຳສັ່ງແນະນຳຂອງກະຊວງພາຍໃນສະບັບເລກທີ 06/ພນ ລົງວັນທີ 2 ພຶດສະພາ 2018 ພ້ອມດຽວກັນນັ້ນ ພະນັກງານ-ລັດຖະກອນແຕ່ລະທ່ານໄດ້ຜັດປ່ຽນກັນຂຶ້ນຜ່ານໃບເກັບກ່ຽວຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານໃນຮອບ 1 ປີຜ່ານມາ ເພື່ອຕີລາຄາດ້ານຄຸນທາດ ການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ, ດ້ານຄວາມຮູ້ຄວາມສາມາດ ແລະ ປະສົບການ ແລະ ດ້ານຜົນສຳເລັດໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ທັງນີ້ກໍເພື່ອຕີລາຄາດ້ານດີ ແລະ ຂໍ້ຄົງຄ້າງ, ວິທີປັບປຸງ ແລະ ແກ້ໄຂ, ການໃຫ້ຄະແນນ ແລະ ຈັດປະເພດຕົນເອງ. ພ້ອມນັ້ນຍັງໄດ້ຕີລາຄາ ແລະ ໃຫ້ຄະແນນໝູ່ຄະນະ ແລະ ເພື່ອນຮ່ວມງານ.

ທ່ານ ມີໄຊ ມີວິໄລ ໄດ້ມີຄຳເຫັນ ທ່ານໃຫ້ຮູ້ເຖິງແນວທາງ ແລະ ການຈັດຕັ້ງປະຕິບັດການປະເມີນ ເຊິ່ງເປັນວຽກປົກກະຕິ ໃນການປະເມີນແມ່ນມີບ່ອນອີງ, ມີຫລັກການພ້ອມທັງຮຽກຮ້ອງໃຫ້ປະເມີນດ້ວຍຄວາມສາມັກຄີ, ຄວາມໂປ່ງໃສພາວະວິໄສ, ບໍ່ໃຫ້ມີອັກຄະຕິ ການໃຫ້ຄະແນນແມ່ນໃຫ້ທຽບໃສ່ມາດຖານທີ່ວາງໄວ້, ໃຫ້ຈິງໃຈຕຳນິສິ່ງຂ່າວເຊິ່ງກັນ ແລະ ກັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານການເປັນເສນາທິການໃຫ້ດີຂຶ້ນກວ່າ.

ເພື່ອຮັບປະກັນໃຫ້ແກ່ການກະກຽມແລະດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຫຼວງນໍ້າທາ ຊຸດທີ IV ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບສະພາບຕົວຈິງ ທັງຮັບປະກັນທາງດ້ານ ເນື້ອໃນ, ທັນເວລາ ແລະ ບັນລຸຕາມແຜນການທີ່ກຳນົດໄວ້.

ວັນທີ 20 ພະຈິກຜ່ານມານີ້, ນີ້ຢູ່ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມກະກຽມວຽກງານໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາປະຊາຊົນແຂວງ ຊຸດທີ IV ໂດຍການເປັນປະທານຂອງ ທ່ານ ມີໄຊ ມີວິໄລ ກຳມະການປະຈຳສະພາປະຊາຊົນແຂວງ ປະທານຄະນະກຳມະການວັດທະນະທຳສັງຄົມ ແລະ ບັນດາເຜົ່າ ເຂົ້າຮ່ວມມີບັນດາທ່ານປະທານ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ,ຫົວຫນ້າ, ຮອງຫົວຫນ້າຂະແໜງ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 30 ກວ່າທ່ານ.

ກອງປະຊຸມໄດ້ຮັບຟັງຂໍ້ຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງຫຼວງນໍ້າທາ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາປະຊາຊົນແຂວງ ຊຸດທີ IV ເຊິ່ງໄດ້ແຕ່ງຕັ້ງຄະນະຊີ້ນຳລວມ; ອະນຸກຳມະການເນື້ອໃນ; ອະນຸກຳມະການບໍລິຫານ, ພິທີການ ແລະ ງົບປະມານ; ອະນຸກຳມະການປ້ອງກັນຄວາມສະຫງົບ ແລະ ຮັກສາສຸຂະພາບ ແລະ ອະນຸກຳມະການຂ່າວສານ ແລະ ໂຄສະນາ; ຈາກນັ້ນໄດ້ຮັບຟັງແຜນການກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ10ຂອງສະພາປະຊາຊົນແຂວງ ຊຸດທີ IV ເຊິ່ງເນື້ອໃນທີ່ຈະນຳເຂົ້າພິຈາລະນາ, ຮັບຮອງເອົາຢູ່ໃນກອງປະຊຸມສະໄໝເທື່ອທີ 10ຄື ວຽກງານປະຈຳຫນຶ່ງປີ (2025-2026) ຂອງອົງການປົກຄອງແຂວງ; ວຽກງານກວດສອບ-ກວດກາລັດ; ວຽກງານອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ; ວຽກງານສະພາປະຊາຊົນແຂວງ; ວຽກງານຫ້າປີ(2021-2025); ບົດປະກອບຄຳເຫັນ; ມະຕິກອງປະຊຸມ; ການປະສານສົມທົບ ແລະ ການກະກຽມເນື້ອໃນ, ພ້ອມນັ້ນຍັງໄດ້ກຳນົດຮູບການ ແລະ ວິທີການດຳເນີນ ກອງປະຊຸມເປັນຕົ້ນແມ່ນວິທີການດຳເນີນກອງປະຊຸມ, ການລົງຄະແນນສຽງຮັບຮອງເອົາມະຕິ, ການປະກອບຄຳເຫັນ, ການຊັກຖາມ, ການກຳນົດເວລາ, ສະຖານທີ່, ເປົ້າໝາຍເຂົ້າຮ່ວມ.

ຕອນທ້າຍກອງປະຊຸມ ປະທານກອງປະຊຸມໄດ້ເນັ້ນໜັກໃຫ້ແຕ່ລະທ່ານທີ່ຖືກແຕ່ງຕັ້ງຈົ່ງເອົາໃຈໃສ່ກະກຽມວຽກທີ່ຕົນເອງຮັບຜິດຊອບດ້ວຍຄວາມຮັບຜິດຊອບສູງເພື່ອໃຫ້ສຳເລັດຕາມແຜນການ, ເວລາທີ່ກຳນົດໄວ້ ເພື່ອຮັບປະກັນໃຫ້ກອງປະຊຸມໄດ້ດຳເນີນຕາມເວລາທີ່ກຳນົດໄວ້.

ແລະ ຕອນເຊົ້າວັນທີ 21 ພະຈິກຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມສະຫຼຸບ ປະເມີນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຮອບທີ 5 ປີຈຳປີ 2025 ແລະ ວາງທິດທາງແຜນການ ປີ 2026 ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ນາງ ວັນມະນີ ລີວົງລັງ ປະທານສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ , ໃຫ້ກຽດເຂົ້າຮ່ວມໂດຍສະຫາຍ ມີໄຊ ມີວິໄລ ຮອງເລຂາໜ່ວຍພັກສະພາປະຊາຊົນແຂວງ, ມີຄະນະບໍລິຫານງານສະຫະພັນແມ່ຍິງແຂວງ, ມີບັນດາທ່ານຕາງໜ້າ ຈາກສະຫະພັນແມ່ຍິງແຂວງ, ອົງການຈັ້ດຕັ້ງມະຫາຊົນພາຍໃນສະພາປະຊາຊົນແຂວງ ມີປະທານ ແລະ ຮອງປະທານສະຫະພັນແມ່ຍິງຮາກຖານໜ່ວຍອ້ອມຂ້າງແລະເອື້ອຍນ້ອງແມ່ຍິງພາຍໃນ ເຂົ້າຮ່ວມທັງໝົດ 21 ສະຫາຍ, ຍິງ 20 ສະຫາຍ.

ໃນກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີຮອບທີ V ປີ 2025 ແລະ ວາງທິດທາງແຜນການປີ 2026 ຂອງສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ແລະ ປະກອບຄຳຄິດຄຳເຫັນ ໃສ່ຮ່າງບົດສະຫຼຸບເພື່ອໃຫ້ບົດສະຫຼຸບ ແລະ ທິດທາງແຜນການຄົບຖ້ວນ ແລະ ສົມບູນຂຶ້ນ, ໄດ້ຜ່ານຂໍ້ຕົກລົງມອບໃບຍັ້ງຢືນຮາກຖານ 3 ດີປະຈຳປີ 2025 ໃຫ້ກຽດມອບໂດຍທ່ານ ມີໄຊ ມີວິໄລ ຄະນະພັກຮາກຖານ, ແລະ ມອບຍ້ອງຍໍໃຫ້ບຸກຄົນທີມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ສະໄໝທີ 9 ປີ 2021-2023 ໃຫ້ສະຫະພັນແມ່ຍິງຮາກຖານສະພາປະຊາຊົນແຂວງ ເປັນກຽດມອບໂດຍສະຫາຍ ມີໄຊ ມີວິໄລ ຈາກນັ້ນ ຕາງໜ້າຄະນະຮາກຖານ ແລະ ສະມາຊິກໄດ້ຂຶ້ນຈັບມືແຂ່ງຂັນ 3 ດີ; ພ້ອມທັງໄດ້ຮັບຟັງການໂອ້ລົມຂອງສະຫາຍ ມີໄຊ ມີວິໄລ ໄດ້ໃຫ້ກຽດ ໂອ້ລົມຕໍ່ສະຫະພັນແມ່ຍິງພາຍໃນຮາກຖານ ກ່ອນອື່ນໄດ້ຍ້ອງຍໍຊົມເຊີຍຜົນງານຂອງເອື້ອຍແມ່ຍິງພາຍໃນຮາກຖານທີ່ຍາດມາໄດ້, ຮຽກຮ້ອງໃຫ້ສືບຕໍ່ຮັກສາມູນເຊື້ອ, ເພີ່ມຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນແລະກັນໃຫ້ຫລາຍກວ່າເກົ່າ, ພ້ອມທັງ ໄດ້ຊີ້ທິດເຍືອງທາງໃນການຈັດຕັ້ງການປະຕິບັດຂໍ້ແຂ່ງຂັນ 3 ດີ ໃຫ້ດີຂຶ້ນເປັນກ້າວໆ.

ແລະ ໃນວັນທີ 24 ພະຈິກ ຜ່ານມາ ກອງປະຊຸມຄະນະປະຈຳຂອງສະພາປະຊາຊົນແຂວງຫລວງນໍ້າທາ (ສພຂ) ປະຈຳເດືອນ ພະຈິກ 2025 ໄດ້ຈັດຂຶ້ນທີ່ຫ້ອງປະຊຸມນ້ອຍຂອງສະພາປະຊາຊົນແຂວງພາຍໃຕ້ການເປັນປະທານຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານ ສພຂ ແຂວງ ມີບັນດາທ່ານຄະນະ ປະຈຳສະພາປະຊາຊົນແຂວງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານຂອງທ່ານປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ສະພາປະຊາຊົນແຂວງ ໄລຍະປະຈຳການແທນປະທານສະພາປະຊາຊົນແຂວງ; ລາຍງານກ່ຽວກັບການຈັດຕັ້ງປະຕິບັດ ບົດບັນທຶກກອງປະຊຸມຄະນະປະຈຳ ສະບັບເລກທີ177/ຄປຈຂ, ລົງວັນທີ 30 ຕຸລາ 2025; ພິຈາລະນາ, ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າກ່ຽວກັບການສະເໜີສ້າງຕັ້ງຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງຫຼວງນໍ້າທາ; ພິຈາລະນາ, ຄົ້ນຄວ້າໜັງສືສະເໜີຂອງທ່ານເຈົ້າ ກ່ຽວກັບການສ້າງຕັ້ງຕາແສງ ຈຳນວນ 19 ຕາແສງ ຂອງແຂວງຫຼວງນໍ້າທາ; ພິຈາລະນາຄົ້ນຄວ້າ ໜັງສືສະເໜີຂອງຄະນະເລຂາທິການ ສະບັບເລກທີ 883/ຄລນ.ສພຂ, ລົງວັນທີ 17/11/2025 ກ່ຽວກັບ ແຜນງົບປະມານ, ປຶກສາຫາລືກ່ຽວກັບການກະກຽມກອງປະຊຸມ ສສຊປະຈຳເຂດເລືອກຕັ້ງ; ກອງປະຊຸມຄົບຄະນະຂອງ 3 ຄະນະກຳມະການຂອງສະພາປະຊາຊົນແຂວງ ແລະ ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຊຸດທີ IV; ປຶກສາຫາລືກ່ຽວກັບການກະກຽມ ແລະ ດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ທັງນີ້ເພື່ອເຮັດໃຫ້ວຽກງານພາຍໃນສະພາປະຊາຊົນແຂວງສຳເລັດຕາມຄາດໝາຍທີ່ວາງໄວ້.

ເພື່ອເຮັດໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V ໄດ້ດຳເນີນຖືກຕ້ອງຕາມກົດໝາຍ ແລະ ມີຜົນສຳເລັດຕາມລະຮັບຄາດໝາຍໃນວັນທີ 25 ພະຈິກຜ່ານມາ, ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງຫລວງນໍ້າທາ ໄດ້ເປີດກອງປະຊຸມການກະກຽມ ແລະ ດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະສະມາຊິກສະພາປະຊາຊົນແຂວງ ຊຸດທີ V ໂດຍການເປັນປະທານຂອງ ທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ໃຫ້ກຽດເຂົ້າຮ່ວມມີ ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ຄະນະປະຈຳສະພາປະຊາຊົນແຂວງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ທັງຫມົດ 19 ທ່ານ, ຍິງ 4 ທ່ານ.

ກອງປະຊຸມໄດ້ຮັບຟັງການຜ່ານມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການເລືອກຕັ້ງຂັ້ນແຂວງ ພ້ອມນັ້ນໄດ້ຮັບຟັງການຜ່ານແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີV, ຮັບຟັງການຜ່ານຂໍ້ຕົກລົງຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງວ່າດ້ວຍການແຕ່ງຕັ້ງ ແລະ ການເຄື່ອນໄຫວຂອງບັນດາ ອະນຸກຳມະການຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ແລະ ຍັງໄດ້ຮັບຟັງການຜ່ານຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການເລືອກຕັ້ງຂັ້ນແຂວງ ເພື່ອດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ V. ຫລັງຈາກນັ້ນ, ບັນດາທ່ານຄະນະກຳມະການເລືອກຕັ້ງຂັ້ນແຂວງ ໄດ້ພ້ອມກັນປະກອບຄຳເຫັນແລກປ່ຽນໃສ່ວຽກງານຕ່າງໆ, ບັນດາມະຕິຕ່າງໆ

ອ່ານຕໍ່ໜ້າ 11





## ສຸກສະບາຍຫາຍໂຣຄ

# ອາຫານທີ່ຄວນກິນຫຼັງອອກກຳລັງກາຍ



\# ຮຽບຮຽງໂດຍ: ດອກຫຍ້າ

ຫຼາຍທ່ານທີ່ອອກກຳລັງກາຍ ຫຼື ຫຼຸດນ້ຳໜັກ ອາດເຂົ້າໃຈຜິດວ່າ ຫຼັງຈາກອອກກຳລັງກາຍແລ້ວນັ້ນ ບໍ່ຄວນຮັບປະທານອາຫານ ເພາະຈະເຮັດໃຫ້ຕຸ້ຍ ແຕ່ໃນຄວາມເປັນຈິງແລ້ວ ຫຼັງຈາກອອກກຳລັງກາຍເປັນຊ່ວງເວລາທີ່ຮ່າງກາຍ ຕ້ອງການອາຫານ ເຊັ່ນ: ນ້ຳ, ໂປຣຕີນ ແລະ ຄາໂບໄຮເດຼດ ເປັນຢ່າງຍິ່ງ ເພື່ອທົດແທນການສູນເສຍ ແລະ ເສີມສ້າງກ້າມເນື້ອ.

ໃນຄໍລຳນີ້ເຮົາມີ ອາຫານທີ່ຄວນຮັບປະທານຫຼັງຈາກອອກກຳລັງກາຍມາແນະນຳໃຫ້ທ່ານໄດ້ຮູ້ ແຕ່ກ່ອນຈະກິນສິ່ງໃດເຂົ້າໄປນັ້ນ ກໍຕ້ອງຂຶ້ນຢູ່ກັບປະລິມານແຄລໍຣີທີ່ເຮົາໄດ້ຮັບເຂົ້າໄປ, ອາດຈະກິນແບບບໍ່ໃຫ້ຫຼາຍ ຫຼື ໜ້ອຍ ດີທີ່ສຸດ ແລະ ທີ່ສຳຄັນ ຄວນຮັບປະທານຫລັງການອອກກຳລັງກາຍສຳເລັດແລ້ວ 30 ນາທີຂຶ້ນໄປ ເພື່ອ ບໍ່ເປັນພາລະໃຫ້ແກ່ຮ່າງກາຍຂອງຕົນເອງຫຼາຍເກີນໄປ.

**1. ໄຂ່:** ອຸດົມໄປດ້ວຍທາດໂປຣຕີນເຖິງ 6.3 ກຣາມ ແລະ ໃນໄຂ່ໜ່ວຍໜຶ່ງກໍມີພຽງ 70 ແກລໍຣີເທົ່ານັ້ນ ຈຶ່ງເວົ້າໄດ້ວ່າໄຂ່ເປັນໜຶ່ງໃນອາຫານຈາກທຳມະຊາດທີ່ດີ ຈຶ່ງບໍ່ແປກໃຈທີ່ເຮົາມັກຈະເຫັນຜູ້ທີ່ຄວບຄຸມນ້ຳໜັກ ຫຼື ແມ່ນແຕ່ນັກເພາະກາຍກໍມັກຈະກິນໄຂ່ກັນເປັນພິເສດ ເພາະມີປະໂຫຍດລ້ວນໆແບບນີ້ ນັກອອກກຳລັງກາຍຈຶ່ງບໍ່ຄວນພາດ.

**2. ນ້ຳໝາກກ້ຽງຄັ້ນສົດ:** ນອກຈາກຈະໄດ້ຮັບວິຕາມິນຊີໃນນ້ຳໝາກກ້ຽງຄັ້ນແລ້ວ ຍັງຈະໄດ້ຮັບຄຸນປະໂຫຍດຈາກທາດໂປຕາສຊຽມ ທີ່ຊ່ວຍໃຫ້ຮ່າງກາຍຂອງເຮົາສົດຊື່ນ, ນ້ຳໝາກກ້ຽງ ຈຶ່ງເປັນສິ່ງທີ່ຄວນດື່ມພາຍຫຼັງຈາກການອອກກຳລັງກາຍ.

**3. ໝາກກ້ວຍ:** ຈັດເປັນອາຫານທີ່ມີຄຸນຄ່າທາງໂພສະນາການຫຼາຍຢ່າງຍິ່ງ ເນື່ອງຈາກອຸດົມໄປດ້ວຍທາດໂປຣຕີນ, ຄາໂບໄຮເດຣດ, ຟອສຟໍຣັສ, ທາດເຫຼັກ, ວິຕາມິນເອ ອີກທັງຍັງມີແມກນີຊຽມ ແລະ ທີ່ສຳຄັນ ຄາໂບໄຮເດຣດໃນກ້ວຍ ສາມາດດູດຊຶມໄດ້ຢ່າງວ່ອງໄວເມື່ອຮັບປະທານຫລັງຈາກການອອກກຳລັງກາຍ ຈຶ່ງສາມາດຊ່ວຍເສີມສ້າງກ້າມເນື້ອ ແລະ ຟື້ນຟູຮ່າງກາຍໄດ້ດີຫຼາຍ.

**4. ປາແຊວມອນ:** ການກິນປາແຊວມອນນັ້ນ ຮ່າງກາຍບໍ່ພຽງແຕ່ຈະໄດ້ຮັບໂປຣຕີນ, ແຕ່ຍັງຈະໄດ້ຮັບສານໂອເມກ້າ 3 ນຳອີກ ເຊິ່ງສານໂອເມກ້າ 3 ທີ່ພົບໃນປາແຊວມອນນັ້ນ ຊ່ວຍສ້າງກ້າມເນື້ອ ແລະ ເພີ່ມປະສິດທິພາບໃນການເຮັດວຽກຂອງກ້າມເນື້ອໃຫ້ຫຼາຍຂຶ້ນ.

**5. ບຣູເບີຣີ:** ບຣູເບີຣີເປັນໝາກໄມ້ທີ່ມີສານຕ້ານອະນຸມູນອິດສະຫຼະຂ້ອນຂ້າງຫຼາຍ ເຊິ່ງມີງານວິໄຈອອກມາວ່າ ບຣູເບີຣີ ສາມາດຊ່ວຍເພີ່ມອັດຕາການຟື້ນຕົວຫລັງຈາກການອອກກຳລັງກາຍໜັກໆໄດ້.

**6. ຖົ່ວ ແລະ ໝາກໄມ້ອົບແຫ້ງ:** ຫາກທ່ານເກີດຢາກກິນແບບຂະໜົມຫຼັງຈາກອອກກຳລັງກາຍ ກໍນຶກເຖິງປະເພດຖົ່ວ ແລະ ໝາກໄມ້ອົບແຫ້ງເປັນອັນດັບທຳອິດ ເພາະເນື່ອງຈາກວ່າທັງສອງສິ່ງທີ່ກ່າວເຖິງນີ້ມີໂປຣຕີນແລະຄາໂບໄຮເດຣດທີ່ຮ່າງກາຍສາມາດດູດຊຶມໄດ້ຢ່າງວ່ອງໄວ; ດັ່ງນັ້ນ, ຫຼັງຈາກອອກກຳລັງກາຍ ຄວນຈະກິນສິ່ງເຫຼົ່ານີ້ປະມານ 1 ຫຼື 2 ກຳມື ເພາະຖົ່ວມີປະໂຫຍດຕໍ່ການສ້າງກ້າມເນື້ອຫຼາຍທີ່ສຸດ ໂດຍສະເພາະປະເພດຖົ່ວເຫຼືອງ ເພາະຖົ່ວເຫຼືອງເຄິ່ງຖ້ວຍ ມີໂປຣຕີນສູງເຖິງ 34 ກຣາມ.

**7. ໝາກນັດ:** ຖືໄດ້ວ່າເປັນໝາກໄມ້ທີ່ມີວິຕາມິນຊີຫຼາຍ ອີກທັງໃນໝາກນັດຍັງມີສານບຣໍມີເລນ (Bromelain) ເຊິ່ງສານນີ້ນອກຈາກຈະຊ່ວຍຍ່ອຍໂປຣຕີນໄດ້ແລ້ວ ຍັງຊ່ວຍຕ້ານການອັກເສບ,ຮັກສາອາການຟົກຊ້ຳ ແລະ ເຄັດຂໍ້ໄດ້ເປັນຢ່າງດີ, ທີ່ສຳຄັນວິຕາມິນຊີໃນໝາກນັດຍັງເປັນອົງປະກອບສຳຄັນໃນການຊ່ວຍທົດແທນເນື້ອເຍື່ອທີ່ສູນເສຍຈາກການອອກກຳລັງກາຍ.

**8. ໝາກກີວີ:** ເປັນໝາກໄມ້ອີກຊະນິດໜຶ່ງ ທີ່ອຸດົມໄປດ້ວຍວິຕາມິນຊີ ແລະ ໂປຕາສຊຽມ ທີ່ມີສ່ວນຊ່ວຍຕ້ານອະນຸມູນອິດສະຫຼະ ສາມາດເສີມສ້າງກ້າມເນື້ອພາຍຫຼັງການອອກກຳລັງກາຍໄດ້ດີບໍ່ແພ້ອາຫານຊະນິດອື່ນໆ.

**9. ນ້ຳດື່ມ:** ຜິວສູນເສຍຄວາມຊຸ່ມຊື່ນ ອາດເກີດຂຶ້ນໄດ້ຫຼັງຈາກທີ່ເຮົາອອກກຳລັງກາຍດັ່ງນັ້ນ, ເພື່ອເຮັດໃຫ້ຄວາມສົດຊື່ນກັບຄືນມາຫຼັງຈາກອອກກຳລັງກາຍໃຫ້ສັງເກດເບິ່ງວ່ານ້ຳໜັກຂອງຕົນເອງຫຼຸດໄປເທົ່າໃດ ຫາກຫຼຸດໄປເທົ່າໃດ ກໍໃຫ້ດື່ມນ້ຳກັບໄປເທົ່ານັ້ນ ເຊິ່ງປະລິມານນ້ຳທີ່ແນະນຳ ແມ່ນໃຫ້ດື່ມຫຼັງອອກກຳລັງກາຍປະມານ 2-3 ຈອກ ກໍເໝາະສົມ.

**ຂໍ້ມູນຈາກ:**
**www.laopost.com**



ອາດ ກະວີລາວ

# ເຫັນໂຕແກ່ ຈະບໍ່ແກ່ໂຕ

\# ດອກຜັກຂະ

❊ ໃນສູດທຳກ່າວໄວ້
ຮຽມຈຶ່ງນຳມາເຜີຍ
ບໍ່ແມ່ນແປງຄຳເວົ້າ
ສັງຂານຂັນທາດນັ້ນ

ຈິງຄັກສັດຈະທຳ ຜີ່ນ້ອງເອີຍ
ເພື່ອວິຈານຈິງແຈ້ງ
ຄວນຄຶດອງປູາດ
ບໍ່ຄົງໝັ້ນແກ່ນແຂງ

❊ ອາຍຸການຂວບເຂົ້າ
ອັນວ່າກຳລັງວັງຊາ
ປະສົບການພູນເພີ້ມ
ການໄປມາບໍ່ຄ່ອງແຄ້ວ

ປາຍພາກຖຸງກະສຽນ ມາແລ້ວ
ບໍ່ຄືດາວກໍ້
ແຕ່ຖືດຖອຍສະມັດຖະພາບ
ຄືກົ້ເກົ່າຫລັງ ໜຸ່ມພຸ້ນ

❊ ທຸກສະຖານທີ່ຕັ້ງ
ລະບຽບການມີວາງ
ຕາມກົນໄກໄຂຊີ້
ຂວບກະສຽນຮອດແລ້ວ

ພາກລັດ-ເອກະຊົນ ທຳງານນັ້ນ!
ບົ່ງມະຕິເກນໄວ້
ລະບຽບການກຳນົດ
ກຽມເຂົ້າສູ່ບຳນານ ຫັ້ນນາ

❊ ໝາຍວ່າ ວຽກໃຫຍ່ນ້ອຍ
ຜູ້ເຫື່ອແຮງຍັງມີ
ປົງປ່ອຍວ່າງບໍ່ຂືນດື້
ບໍ່ຝືນຂັດງັດຂໍ້

ຄົນໃໝ່ມາແທນ
ສືບເສີມຂະຫຍາຍສ້າງ
ຕາມກົດ ຕາມລະບຽບ
ເມທີເຊື້ອປູາດຍໍ ຍ້ອງແລ້ວ

❊ ຮູ້ຕົນເອງທ່ອງແທ້
ປະໂຫຍດລວມແລຫຼີງ
ບໍ່ຄຶກແຄງແປງປັ້ນ
ບໍ່ຝືນທຳມະຊາດສ້າງ

ບໍ່ເຫັນແກ່ຕົວຕົນ
ຈາກໃຈຈິງແຈ້ງ
ມໍມັງຫ້າວຮື່ນ
ວາງໄວ້ແວ່ນໃຈ

❊ ຕົນເບິ່ງຕົນອອກໄດ້
ບໍ່ຂືນກົດຫັກໂຫມ
ເຫັນວ່າສັງຂານຂ້ອນ
ກໍພັກຜ່ອນເພື່ອໃຫ້

ຊາຊັ່ງແຮງມີ ຕົນນັ້ນ
ຂົ່ມຕົນເກີນນັ້ນ
ໜັງຍານແຂ້ວຫຼ່ອນ
ເຂົາພຸ້ນສືບແທນ ຫັ້ນແລ້ວ!

## ພັກຫາຍ ລະບາຍ



(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

\# ສຽມທ້ຽນ

❊ ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ໄດ້ປິດລົງໃນວັນທີ 21 ພະຈິກ ພາຍຫຼັງທີ່ດຳເນີນມາເປັນເວລາຫຼາຍວັນ ປອງປະຊາຊື່ນຊ້ອຍ ຄອຍຊົມທ່ານ ສສຊ ຍົກຍ່ອງເອົາຜົນງານ ຮ່ວມປະຊຸມຮັບຮອງໄດ້ ທັງແຜນການຄາດໝາຍໄວ້ ກຽມເຄື່ອນໄຫວເຜີຍແຜ່ ໃຫ້ພໍ່ແມ່ພີ່ນ້ອງ ລາວຮູ້ທົ່ວເຖິງນັ້ນແລ້ວ!

❊ ຂ່າວແຈ້ງວ່າໄລຍະນີ້ອາກາດຈະເຢັນລົງ 2-3 ອົງສາ ແລະ ມີຝົນຕົກລະດັບຄ່ອຍຫາປານກາງຢູ່ທາງພາກກາງຫາພາກໃຕ້ ຍ້ອນຄວາມກົດດັນອາກາດເຢັນຈາກປະເທດຈີນແຜ່ມາປົກຫຸ້ມ ອາໄຍພັດຍອກຍູ້ ເມໂຄລ່ອງລອຍໄຫຼ ຜັດປ່ຽນໄປຕາມລະດູ ເຄື່ອນໝູນຫຍັບຍ້າຍ ໜາວກາຍມີແພຕຸ້ມ ສະໄບໜາບີງທົ່ມ ໜາວລົມຊາດຄູ່ຊ້ອນນອນລີ້ບໍ່ອຸ່ນຖືງຈຶ່ງຂ່ວນເພີ່ນຜູ້ຍັງໂສດດຽວດາຍໝາຍລ່າຫາມອງຫຼຽວຄູ່ມາຊົມຊ້ອນຊອກຜູ້ນອນຄຽງຂ້າງເປັນ TOTO ນອນຫົ່ມ ທ້າສາຍລົມພັດລິ້ວ ບໍ່ມີຢ້ານບ່ອນໃດຄັກແລ້ວ!

### ຊອບຍິ້ມ

\# ພົ້ງລຶ່ງ

## ເລື່ອງ: ຕາບໍ່ດີ

**ຜົວ:** ຈັບເອົາໂມງມາໃຫ້ຂ້ອຍແດ່
**ເມຍ:** ຢູ່ບ່ອນໃດ?
**ຜົວ:** ຢູ່ໜ້າໂຕະຂ້າງໃຫລະຫັດທັ້ນເດ!
**ເມຍ:** ບໍ່ມີ...
**ຜົວ:** ເປັນຫຍັງຄືຕາບໍ່ດີປານນັ້ນຫວະ! ຖ້າເປັນງູມັນຕອດເຈົ້າຕາຍແລ້ວ
**ເມຍ:** ເອີ... ຄັນກູຕາດີ, ກູບໍ່ເອົາມຶງມາເປັນຜົວດອກ!!!



### ສຸພາສິດ-ຄະຕິເຕືອນໃຈ

\# ດອກຫຍ້າ

ໃຈປະສົງແລ້ວ ແນວດີແຕ້ມຕື່ມ
ໃຈບໍ່ປະສົງແລ້ວ ແນວຮ້າຍຕູ່ຫາ



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 17 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ ໄດ້ມີກອງປະຊຸມຄັ້ງທຳອິດຂອງອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ໂດຍການເປັນປະທານຂອງທ່ານ ປອ. ຄຳພັນ ພົມມະທັດ ຮອງປະທານຄະນະກຳມະການເລືອກຕັ້ງລະດັບຊາດ (ຄລຊ), ຫົວໜ້າອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ເຊິ່ງມີບັນດາທ່ານກຳມະການໃນ ຄລຊ, ຄະນະໃນອະນຸກຳມະການດັ່ງກ່າວ ແລະ ກອງເລຂາຊ່ວຍວຽກ ເຂົ້າຮ່ວມຢ່າງພ້ອມພຽງ; ຈຸດປະສົງກອງຄັ້ງຊຸມຄັ້ງນີ້ ແມ່ນເພື່ອຮ່ວມກັນຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄວາມເຫັນກ່ຽວກັບການວາງທິດທາງແຜນການໃນການເຄື່ອນໄຫວວຽກງານຂອງອະນຸກຳມະການເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານສຳເລັດຕາມແຜນການທີ່ວາງໄວ້ຢ່າງມີປະສິດທິພາບ, ປະສິດທິຜົນ ເປັນຕົ້ນແມ່ນເອກະສານ 5 ສະບັບທີ່ຕິດພັນກັບວຽກງານຂອງອະນຸກຳມະການ ຄື:

1. ຮ່າງຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດວ່າດ້ວຍການໂຄສະນາ, ແລະ ປຸກລະດົມຂະບວນການໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

2. ຜ່ານຂໍ້ຕົກລົງແຕ່ງຕັ້ງບັນດາໜ່ວຍງານຂອງອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ.

3. ຮ່າງແຜນການດຳເນີນງານຂອງອະນຸກຳມະການໂຄສະນາ ແລະ ປຸກລະດົມຂະບວນການ ໃນບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

4. ປະກອບຄຳເຫັນແລະຕົກລົງເອກະສານສຳຄັນຈຳນວນໜຶ່ງ ເພື່ອເຝິກອົບຮົມພະນັກງານຫຼັກແຫຼ່ງທົ່ວປະເທດ ກ່ຽວກັບວຽກງານເລືອກຕັ້ງ ຄື:

- ເອກະສານເຊື່ອມຊຶມ ແລະຜັນຂະຫຍາຍມະຕິກົມການເມືອງສູນກາງພັກ ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V;

- ເອກະສານເພີ່ມທະວີການນຳພາແນວຄິດ, ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V;

- ເອກະສານກຳແໜ້ນເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເຮັດໃຫ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V ດຳເນີນຖືກຕ້ອງຕາມກົດໝາຍ, ສອດຄ່ອງກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ ແລະ ມີປະສິດທິຜົນ;

- ເອກະສານເຊື່ອມຊຶມເພື່ອຈັດຕັ້ງປະຕິບັດແຜນການດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃຫ້ປາກົດຜົນເປັນຈິງ;

-ເອກະສານຮໍ່າຮຽນໂຄສະນາເຜີຍແຜ່ທົ່ວໄປ.

ຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າ, ປະກອບຄຳຄິດຄຳເຫັນຕໍ່ບັນດາເອກະສານດັ່ງກ່າວໃຫ້ມີເນື້ອໃນຄົບຖ້ວນ, ຖືກຕ້ອງແລະສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

## ບາງຄຳຄິດເຫັນ...

(ຕໍ່ຈາກໜ້າ 7)

ການນຳເອົາຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດມາປະຕິບັດໃຫ້ຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາຕາມກົດໝາຍ ແລະ ລະບຽບການ ລວມທັງການປະສານສົມທົບກັບກະຊວງຍຸຕິທຳແລະພາກສ່ວນກ່ຽວຂ້ອງ ເພື່ອຄົ້ນຄວ້າຊອກຫາສາເຫດ ແລະ ມາດຕະການແກ້ໄຂສະພາບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແຕ່ບໍ່ສາມາດປະຕິບັດໄດ້ ທີ່ຍັງຄ້າງເປັນຈຳນວນຫຼວງຫຼາຍເພື່ອແກ້ໄຂໃຫ້ເປັນຮູບປະທຳດີຂຶ້ນ;

- ສືບຕໍ່ຄົ້ນຄວ້າປັບປຸງກົນໄກການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ 4 ພາກສ່ວນດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ແໜ້ນແຟ້ນ ແລະ ກົມກຽວ, ຍົກສູງຄວາມຮັບຜິດຊອບການເມືອງຂອງແຕ່ລະພາກ ສ່ວນ ເຮັດໃຫ້ການດຳເນີນຄະດີສອດຄ່ອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງແຕ່ລະພາກສ່ວນ ຮັບປະກັນໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ດີຂຶ້ນ;

- ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ບັນດານິຕິກຳໃຕ້ກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນເປັນຕົ້ນການຕິດຕາມກວດກາການດຳເນີນຄະດີແພ່ງທີ່ພົວພັນກັບຜົນປະໂຫຍດຂອງລັດ, ລວມໝູ່, ເດັກ ແລະ ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ທັງຈັດຕັ້ງການໂຄສະນາເຜີຍແຜ່ແນະນຳໃຫ້ແກ່ພະນັກງານໄອຍະການປະຊາຊົນແຕ່ລະຂັ້ນ ລວມທັງຄູ່ຄວາມ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໄດ້ຮັບຮູ້ ແລະ ເຂົ້າໃຈ ສິດ, ພັນທະ, ຂັ້ນຕອນ ຂອງການເນີນຄະດີ ໃຫ້ເລິກເຊິ່ງ ແລະ ທົ່ວເຖິງ.

## ຮອງປະທານ...

(ຕໍ່ຈາກໜ້າ 6)

ລະນະ, ໜີ້ບໍ່ເກີດດອກອອກຜົນ ແລະການປັບປຸງລັດວິສາຫະກິດ.

ທ່ານ ທັນຕາ ກອງຜາລີ ໄດ້ສະແດງຄວາມຂອບໃຈຕໍ່ການ ປະເມີນ ແລະ ຄຳສະເໜີແນະຂອງຄະນະຊ່ຽວຊານຂອງ IMF ເຊິ່ງຄຳແນະນຳລ້ວນແລ້ວແຕ່ມີຄວາມໝາຍຄວາມສຳຄັນ, ກຜງສ ກໍຄືສະພາແຫ່ງຊາດ ຈະໄດ້ນຳໄປປຶກສາຫາລືກັບຂະແໜງການກ່ຽວຂ້ອງຂອງລັດຖະບານ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ ແລະ 5 ປີ ໃຫ້ມີຜົນສຳເລັດໃນຕໍ່ໜ້າ.

ໃນຕອນທ້າຍ, ຮອງປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ສະເໜີກອງທຶນການເງິນລະຫວ່າງປະເທດ ສືບຕໍ່ໃຫ້ການຊ່ວຍເຫຼືອດ້ານວິຊາການ ແລະ ແນະນຳສປປລາວກ່ຽວກັບເສດຖະກິດມະຫາພາກລວມທັງໃຫ້ການຊ່ວຍເຫຼືອສະພາແຫ່ງຊາດ ເພື່ອສາມາດຕິດຕາມກວດກາວຽກງານຂອງລັດຖະບານຕາມພາລະບົດບາດ, ສິດ ແລະ ໜ້າທີ່; ພ້ອມທັງອວຍພອນໃຫ້ຄະນະ ຈົ່ງປະສົບຜົນສຳເລັດໃນການຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ໃນຄັ້ງນີ້.

## ປະດັບ...

(ຕໍ່ຈາກໜ້າ 1)

ງານສະມາຊິກສະພາແຫ່ງຊາດ ໄດ້ກ່າວຈຸດປະສົງແລະຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປະດັບຫຼຽນກາລະນຶກ50ປີສະພາແຫ່ງຊາດ ໃຫ້ແກ່ບັນດາກຳມະການກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ, ສະມາຊິກສະພາແຫ່ງຊາດ ຊຸດທີ I-IX, ລັດຖະມົນຕີ, ທຽບເທົ່າ, ເລຂາພັກນະຄອນຫຼວງ, ແຂວງ, ຮອງລັດຖະມົນຕີ, ຮອງເລຂາພັກນະຄອນຫຼວງ, ແຂວງ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແຕ່ຊຸດ III-IV.

ຈາກນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ປະດັບຫຼຽນກາລະນຶກ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດ ໃຫ້ແກ່ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ຊຸດທີ VIII; ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ປະດັບຫຼຽນກາລະນຶກ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດ ແລະ ຫຼຽນກາລະນຶກ 5 ປີ ສະພາແຫ່ງຊາດ ຊຸດທີ IX ໃຫ້ແກ່ທ່ານປະທານສະພາແຫ່ງຊາດ ແລະ ປະດັບໃຫ້ແກ່ສສຊ ນັບແຕ່ເຂດເລືອກຕັ້ງທີ 1-18; ທ່ານ ປອ. ໄຊສົມພອນ ພົມວິຫານ ປະດັບຫຼຽນໄຊແຮງງານຊັ້ນ I ໃຫ້ແກ່ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ ແລະ ຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ປະດັບຫຼຽນໄຊແຮງງານຊັ້ນ I ໃຫ້ແກ່ສສຊ ຊຸດທີ IX; ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ປະດັບຫຼຽນໄຊແຮງງານຊັ້ນ II ໃຫ້ແກ່ສສຊ ຊຸດທີ IX.

**(ກົງທະນູຄຳ ພິພັດເສລີ)**



## ສພຊ...

(ຕໍ່ຈາກໜ້າ 9)

ຢ່າງລະອຽດພໍສົມຄວນ ເພື່ອຄວາມເປັນ ເອກະພາບໃນການນຳໄປຈັດຕັ້ງປະຕິບັດ.

ໃນຕອນທ້າຍກອງປະຊຸມທ່ານປະທານກອງປະຊຸມໄດ້ຮຽກຮ້ອງໃຫ້ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຊີ້ນຳນຳພາບັນດາອະນຸກຳມະການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ, ພ້ອມກັນຮີບຮ້ອນປະຕິບັດຫນ້າທີ່ຕາມຄວາມຮັບຜິດຊອບດ້ວຍຄວາມຮັບຜິດຊອບສູງເພື່ອໃຫ້ສຳເລັດຕາມຄາດໝາຍ.

ແລະ ໃນວັນທີ 26 ພະຈິກ ຜ່ານມາ, ທີ່ຫ້ອງປະຊຸມຫ້ອງວ່າການເມືອງນາແລ ໄດ້ເປີດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳ 5 ປີ ( 2021-2025 ), ວາງທິດທາງ 5 ປີ (2026-2030) ແລະ ແຜນຈຸດສຸມປະຈຳປີ 2026 ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ນາແລ ໂດຍການເປັນປະທານຂອງທ່ານ ທຳມະວົງ ບຸນຖາວອນ ກຳມະການພັກແຂວງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງນາແລ, ໃຫ້ກຽດເຂົ້າຮ່ວມໂດຍທ່ານກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານປະທານຄະນະກຳມະການປົກເມືອງ, ຮອງປະທານຄະນະກຳມະການປົກເມືອງ, ຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ ຫຼື ຮອງຫ້ອງການ, ກອງບັນຊາການ ປກສ, ປກຊ-ປກສ, ລັດວິສາຫະກິດນ້ຳປະປາ, ໄຟຟ້າ, ຫົວໜ້າໜ່ວຍບໍລິການທະນາຄານພາຍໃນເມືອງເຂົ້າຮ່ວມທັງໝົດ 37 ທ່ານ, ຍິງ 4 ທ່ານ.

ໃນກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານປະຈຳ 5 ປີ (2021-2025), ວາງທິດທາງ 5 ປີ (2026-2030) ແລະ ແຜນຈຸດສຸມປະຈຳປີ 2026 ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດ ເລືອກຕັ້ງເມືອງ ນາແລ ແລະ ຜູ້ແທນກອງປະຊຸມກໍໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບ ເພື່ອໃຫ້ບົດສະຫຼຸບ ແລະ ວາງທິດທາງ 5 ປີ ຄົບຖ້ວນ ແລະ ສົມບູນຂຶ້ນ,

ໃນໂອກາດນີ້ ທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ ຍັງໄດ້ມີຄຳເຫັນຕໍ່ການເຄື່ອນໄຫວວຽກງານ 5 ປີ ( 2021-2025) ວາງທິດທາງ 5ປີ ( 2026-2030) ຂອງຄະນະ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບວຽກງານ ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ເຫັນວ່າມີຜົນສຳເລັດຫລາຍດ້ານ ພ້ອມທັງ ຮຽກຮ້ອງໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານນັບແຕ່ ກອງປະຊຸມປະຈຳ 5 ປີ ຫາກອງປະຊຸມປະຊຸມມະລິກ ຂອງສະພາປະຊາຊົນແຂວງໃຫ້ສຳເລັດຕາມແຜນການທີ່ວາງໄວ້.

**(ຂ່າວ ວັນນີ ແຝງບົວວັນ ແລະ ນາງ ອຳພອນ ສີປະເສີດ**

ເຝົ້າເບິ່ງ ໄດ້ຍິນ ໄດ້ຍິນ

# ເດັກນ້ອຍທີ່ມາພ້ອມໆກັບຍຸກດິຈິຕອນ

❖ ວິເສດ ສະແຫວງສຶກສາ

ພົບກັນໃນຄໍລຳເກົ່າເຈົ້າເດີມເທື່ອນີ້ ມີແນວເວົ້າໃຫ້ຟັງ 2 ເລື່ອງຈາກປະເທດອົດສະຕຣາລີ ແລະ ສິງກະໂປ ຕາມລຳດັບ ຄືຂ່າວກ່ຽວກັບການອອກກົດລະບຽບຄວບຄຸມການບໍລິການທາງອອນລາຍ ແລະ ມາດຕະການເຄັ່ງຄັດເພື່ອປາບປາມບັນຊີມ້າ. ສຳລັບຂ່າວທີໜຶ່ງນັ້ນບອກວ່າໜ່ວຍງານຄວບຄຸມຄວາມປອດໄພຂອງອົດສະຕຣາລີ ໄດ້ເຂັ້ມມາດຕະການຄວບຄຸມການບໍລິການອອນລາຍທີ່ກວມເອົາຫຼາຍປະເພດເຊັ່ນ: ແພລດຟອມສື່ສັງຄົມ, ເວັບໄຊເກມ ແລະ ການບໍລິການດ້ານປັນຍາປະດິດ ຫຼື ເອໄອ-AI; ກົດລະບຽບຄວບຄຸມສະບັບໃໝ່ນີ້ ຍັງໄດ້ກຳນົດໂທດຕໍ່ຜູ້ລະເມີດດ້ວຍການປັບໃໝໃນມູນຄ່າສູງສຸດ 50 ລ້ານໂດລາອົດສະຕຣາລີ ຫຼື ເທົ່າກັບ 33 ລ້ານໂດລາສະຫະລັດ. ນອກຈາກນັ້ນ, ທາງການອົດສະຕຣາລີຍັງໄດ້ເປີດເຜີຍວ່າ ແຊດບອດ (Chatbots) ທີ່ຂັບເຄື່ອນດ້ວຍ AI ນັ້ນ ເປັນໄພອັນຕະລາຍຕໍ່ເດັກນ້ອຍ ເນື່ອງຈາກວ່າອາດສະໜອງຂໍ້ມູນທີ່ສົ່ງເສີມໃຫ້ມີການຂ້າຕົວຕາຍ ຫຼື ການສົນທະນາທີ່ມີເນື້ອໃນພົວພັນທາງເພດ; ທາງກຳມາທິການດ້ານຄວາມປອດໄພຂອງສື່ເອເລັກໂຕຣນິກອົດສະຕຣາລີ ໄດ້ເປີດເຜີຍວ່າ ໃນປັດຈຸບັນ, ເນື້ອໃນຜ່ານສື່ເອເລັກໂຕຣນິກທີ່ບໍ່ເໝາະສົມກັບອາຍຸຂອງເດັກນັ້ນໄດ້ເພີ່ມເປັນຈຳນວນຫຼວງຫຼາຍ ເຊັ່ນ: ເຮັດໃຫ້ມີກໍລະນີເດັກອາຍຸ 10 ປີ ເສືອກໄປສົນທະນາທາງເພດກັບ AI. ກ່ອນໜ້າການອອກກົດລະບຽບຄວບຄຸມສະບັບນີ້, ທາງການອົດສະຕຣາລີ ກໍໄດ້ອອກກົດລະບຽບຫ້າມເດັກອາຍຸຕໍ່າກວ່າ 16 ປີ ໃຊ້ສື່ສັງຄົມອອນລາຍ ເຊິ່ງຈະເລີ່ມມີຜົນສັກສິດແຕ່ເດືອນທັນວາປີນີ້ເປັນຕົ້ນໄປ; ມາດຕະການຫ້າມນີ້ ກວມເອົາການບໍລິການຂອງເຟສບຸກ, ອິນສະຕຣາແກມ ແລະ ຢູທູບ.

ບັດນີ້ກ້ຽວມາປະເທດສິງກະໂປ ທີ່ມີມາດຕະການຈິງຈັງຕັ້ງໜ້າໃນການປາບປາມອາຊະຍາກຳທາງໄຊເບີ ເຊັ່ນ: ການຕົ້ມຕຸ໋ນ, ການປອມແປງ, ການສໍ້ໂກງທາງການເງິນ ທີ່ພວກເຮົາຍິນລົ້ງຫູວ່າສະແກມ; ສ່ວນເລື່ອງທີ່ພວມເວົ້າໃຫ້ຟັງຢູ່ນີ້ ແມ່ນກ່ຽວກັບ "ບັນຊີມ້າ" ທີ່ມີເປົ້າໝາຍໃຫ້ກຸ່ມແກ໊ງສໍ້ໂກງ ນຳໄປໃຊ້ໃນການກະທຳຜິດ, ມາດຕະການດັ່ງກ່າວໄດ້ກຳນົດວ່າ ບຸກຄົນໃດຍິນຍອມຮັບຈ້າງ ຫຼື ຍິນຍອມເປີດບັນຊີມ້າ ເພື່ອໃຫ້ພວກສໍ້ໂກງນຳໃຊ້ໃນການກະທຳຜິດ ຫຼື ຫຼອກລວງຄົນອື່ນ ຈະຖືກຈຳກັດການເຂົ້າເຖິງການບໍລິການທາງການເງິນ ກໍຄືການຢືນຢັນຕົວຕົນໂດຍທາງການ ຕະຫຼອດການຖືກຫ້າມລົງທະບຽນເບີໂທລະສັບໃໝ່. ມາດຕະການດັ່ງກ່າວ, ແມ່ນຜົນການຮ່ວມມືຂອງ 4 ພາກສ່ວນຄື: ທະນາຄານແຫ່ງຊາດ; ອົງການຕຳຫຼວດ; ໜ່ວຍງານຂໍ້ມູນຂ່າວສານ, ການສື່ສານ ແລະ ການພັດທະນາສື່; ແລະ ອົງການເຕັກໂນໂລຊີແຫ່ງລັດ. ບັນຊີມ້າ ຫຼື ບັນຊີຫຼອກລວງນັ້ນ ມີເປົ້າໝາຍນຳໃຊ້ເພື່ອໂອນເງິນທີ່ໄດ້ຈາກການສໍ້ໂກງທາງລະບົບເອເລັກໂຕຣນິກ ລະຫວ່າງທະນາຄານ ແລະ ອອກນອກປະເທດ ເຊິ່ງເຮັດໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຕິດຕາມໄດ້ຍາກ; ອາຊະຍາກຳທາງບັນຊີມ້ານີ້ ມັກເລືອກໂອນເງິນຜ່ານທະນາຄານອິນເຕີເນັດ, ການບໍລິການ PayNow (ຈ່າຍໂລດ) ການເຮັດທຸລະກຳທີ່ໃຊ້ບັດ ແລະ ການຖອນເງິນຈາກຕູ້ ATM. ມາດຕະການນີ້ ຈະສະກັດກັ້ນບໍ່ໃຫ້ຜູ້ຖືບັນຊີມ້າ ເຂົ້າເຖິງລະບົບການໂອນເງິນທີ່ກ່າວມາຂ້າງເທິງນີ້, ບັນຊີມ້າກໍຄືບັນຊີບ້າເຊັ່ນດຽວກັບຢາມ້າໃນເມື່ອກ່ອນປ່ຽນມາເປັນຢາບ້າໃນປັດຈຸບັນ.

ທະນາຄານພັດທະນາລາວ
LDB Bank




#ບ່າວກະບື

**ຄົນ**ບ້ານໃກ້ເຮືອນຄຽງ ແມ່ນຜູ້ທີ່ຮູ້ຈັກທ່ານດີກວ່າທ່ານຮູ້ຈັກຕົນເອງ.

#BAOKBU

Neighbours are people who know more about you than you do yourself.

ຕາມພາສາ ກາຕູນ



ໃຈແຄບ ທາງເລີຍແຄບນຳ

● ໂດຍ : ພູຜາ

## ພິຈາລະນາ...

(ຕໍ່ຈາກໜ້າ 3)

ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີຄວາມເຂັ້ມງວດເດັດຂາດແທ້ ເພື່ອບໍ່ໃຫ້ເປັນຊ່ອງວ່າງ ເຊິ່ງຈະເປັນຜົນກະທົບເຖິງຄວາມສັກສິດຂອງກົດໝາຍ.

3. ການປັບປຸງກົງຈັກການຈັດຕັ້ງຂອງເຈົ້າໜ້າທີ່ແກ້ໄຂບັນຫາຢາເສບຕິດຂັ້ນເມືອງ, ຂັ້ນຕາແສງ ແລະ ຂັ້ນບ້ານ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ; ປັບປຸງຍົກລະດັບເຈົ້າໜ້າທີ່ສືບສວນ-ສອບສວນ, ສານ, ໄອຍະການ ໃຫ້ດຳເນີນຄະດີໄດ້ຢ່າງວ່ອງໄວ ແລະ ຖືກຕ້ອງຕາມກົດໝາຍ.

4.ປະຕິບັດຢ່າງເຂັ້ມງວດຕາມ 3 ຫຼັກການ: ເດັດຂາດ, ໂປ່ງໃສ ແລະ ທັນເປັນມືອາຊີບຂອງເຈົ້າໜ້າທີ່ ໃນການແກ້ໄຂບັນຫາຢາເສບຕິດ ໃຫ້ມີປະສິດທິພາບ, ປະສິດທິຜົນສູງ, ໂປ່ງໃສ ແລະ ເປີດເຜີຍຕໍ່ສັງຄົມ.

5. ສືບຕໍ່ແກ້ໄຂບັນຫາຄວາມແອອັດຂອງສະຖານທີ່ຄຸມຂັງ, ສູນບຳບັດ, ປິ່ນປົວ; ປະກອບວັດຖຸອຸປະກອນ, ຢາປິ່ນປົວທີ່ຈຳເປັນ; ຈັດຕັ້ງເຝິກອົບຮົມວິຊາຊີບ, ປະກອບວຽກເຮັດງານທຳ ໃຫ້ນັກໂທດ, ຜູ້ຖືກຕ້ອງຫາ ໃຫ້ໄດ້ອອກແຮງງານສ້າງລາຍຮັບ, ຍົກສູງຊີວິດການເປັນຢູ່ ແລະ ໄດ້ຮັບການປິ່ນປົວໃນເວລາເຈັບເປັນ.

6. ເພີ່ມທະວີການພົວພັນຮ່ວມມືສາກົນແລະພາກພື້ນໃນການແກ້ໄຂຢາເສບຕິດ ໂດຍສະເພາະບັນດາປະເທດທີ່ຊາຍແດນຕິດຈອດ ສປປລາວ ຫຼື ປະເທດຄູ່ເຈລະຈາ, ຄູ່ຮ່ວມມືຕາມກົນໄກທີ່ມີຢ່າງແຂງແຮງ ແລະ ເປັນເຈົ້າການ.

## ຜົນສຳເລັດ...

(ຕໍ່ຈາກໜ້າ 3)

ຜູ້ມີສິດເລືອກຕັ້ງ 8,444 ຈຸດ, ມີຜູ້ເຂົ້າຮ່ວມ 839,567 ຄົນ ຍິງ 346,320 ຄົນ; ນອກນັ້ນ, ຍັງໄດ້ລະດົມທຶນການຊ່ວຍເຫຼືອດ້ານງົບປະມານ ແລະ ວັດຖຸເຄື່ອງໃຊ້ຕ່າງໆ ໃຫ້ແກ່ປະຊາຊົນ ລວມເປັນມູນຄ່າທັງໝົດ 7,349,275,756 ກີບ. ປີ 2025 ພົບປະປະຊາຊົນ ແລະ ຜູ້ມີສິດເລືອກຕັ້ງ 1, 557 ຈຸດ, ມີຜູ້ເຂົ້າຮ່ວມ 155,037 ຄົນ ຍິງ 62,479 ຄົນ ແລະ ໄດ້ລະດົມການຊ່ວຍເຫຼືອດ້ານງົບປະມານແລະວັດຖຸເຄື່ອງໃຊ້ຕ່າງໆ 2,189,470,000 ກີບ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພົດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ